# ຄູ່ມືການປະຕິບັດຕົວຈິງ
## ການກະຕຸ້ນວຽກງານສຸຂະອະນາໄມໂດຍ ຊຸມຊົນເປັນເຈົ້າການ (ສບຊຈ ຫຼື ຊີແອວທີເອັດສ໌-CLTS)

ຄູ່ມືການປະຕິບັດຕົວຈິງສຳລັບພະນັກງານສົ່ງເສີມພາກສະໜາມ,
ໂດຍອີງໃສ່ປະສົບການຕົວຈິງຂອງ ຊີແອວທີເອັດສ໌ ທີ່ໄດ້ຈາກຢ່າງໜ້ອຍ 8 ປະເທດ
ໃນຂົງເຂດອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ ແລະ ອາຟຼິກາຕາເວັນອອກ






ເດືອນພະຈິກ 2005

**ທ່ານ ຄາມໍ ກາ** (Kamal Kar)
ທີ່ປຶກສາອິດສະຫລະ ແລະ ອາຈານສອນຜູ້ຮ່ວມງານ
ສະຖາບັນຄົ້ນຄວ້າກ່ຽວກັບການພັດທະນາ, ມະຫາວິທະຍາໄລຊັດເຊັກ, ໄບຼຕັນ BN1 9RE, ປະເທດອັງກິດ

ISBN 1 85864 884 X (Original English version)
© ສະຖາບັນຄົ້ນຄວ້າກ່ຽວກັບການພັດທະນາ 2005.
ຄູ່ມືນີ້ແມ່ນອະນຸຍາດໃຫ້ສຳເນົາ ແລະ ແປເປັນພາສາຕ່າງໆເພື່ອຮັບໃຊ້ວຽກງານທີ່ບໍ່ຫວັງຜົນກຳໄລ

## ສາລະບານ

ຊີແອວທີເອັດສ໌ ແມ່ນຫຍັງ? ........ 1

ຈະຈຸດປະກາຍ ຊີແອວທີເອັດສ໌ ແນວໃດ ........ 2

ການລຽງລຳດັບຂອງຂັ້ນຕອນຕ່າງໆ ........ 3

ການແນະນຳ ແລະ ການສ້າງຄວາມສຳພັນອັນດີງາມ ........ 3

ວິທີການດຳເນີນການວິເຄາະສຸຂະອະນາໄມຂອງຊຸມຊົນ ........ 5

*ການຍ່າງສຳຫຼວດ* ........ *5*

*ການເຮັດແຜນທີ່ຂອງພື້ນທີ່ຖ່າຍຊະຊາຍ* ........ *7*

*ການຄິດໄລ່* ........ *9*

ຊ່ວງເວລາຈຸດປະກາຍ ........ 10

ການວາງແຜນປະຕິບັດງານ ........ 11

ການຈັດຕັ້ງປະຕິບັດຂອງຊຸມຊົນ ແລະ ການຕິດຕາມ ........ 13

*ສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ* ........ *14*

ການຜັນຂະຫຍາຍ ຊີແອວທີເອັດສ໌ ........ 14

Photos used in this Practical Guide:

- Concern Worldwide: CLTS facilitators training and pilot program in Hoa Meuang district, Houaphan province (November 2008)
- SNV: Visit to Concern Worldwide CLTS pilot villages in Hoa Meuang district, Houaphan province by Erick Baetings (April 2009)

Lao translation arranged by Plan International Laos. Editing and layout by SNV (Netherlands Development Organisation) Lao PDR.

The Lao language version of the CLTS Practical Guide was published on behalf of all the members of the Lao PDR WASH Technical Working Group.

# ຊີແອວທີເອັດສ໌ ແມ່ນຫຍັງ?

ການທີ່ບໍ່ມີສວ້ມຖ່າຍກັນຢ່າງພຽງພໍນັ້ນ ມັກຈະກໍ່ໃຫ້ເກີດມີການຖ່າຍຊະຊາຍ, ສິ່ງຜົນສະທ້ອນອັນບໍ່ດີໃຫ້ແກ່ສັງຄົມ ແລະ ສຸຂະພາບຂອງຊຸມຊົນ ໂດຍສະເພາະເຮັດໃຫ້ເກີດມີການແຜ່ລະບາດຂອງພະຍາດຕ່າງໆ ເຊັ່ນ: ພະຍາດຖອກທ້ອງ ແລະ ອະຫິວາ. ຊີແອວທີເອັດສ໌ ແມ່ນຂະບວນການ ເພື່ອກະຕຸ້ນ ໃຫ້ຊຸມຊົນໃນເຂດຊົນນະບົດເປັນເຈົ້າການໃນການ ຢຸດຕິພຶດຕິກຳການຖ່າຍຊະຊາຍ ແລະ ຫັນປ່ຽນມາສ້າງ ແລະ ນຳໃຊ້ວິດຖ່າຍດ້ວຍຕົນເອງໂດຍບໍ່ຕ້ອງອາໄສການຊ່ວຍເຫຼືອດ້ານການເງິນຈາກທາງນອກ ເພື່ອຊື້ອຸປະກອນກໍ່ສ້າງ ເຊັ່ນ: ທໍ່ວສ້ວມ ແລະ ທໍ່ນໍ້າ. ປະຊາຊົນສາມາດວິເຄາະສະພາບບັນຫາສຸຂາພິບານຂອງເຂົາເຈົ້າເອງ ໂດຍການນຳໃຊ້ວິທີການປະເມີນຊົນນະບົດແບບມີສ່ວນຮ່ວມ ຫຼື ພີອາເອ-PRA ເຊິ່ງການວິເຄາະດັ່ງກ່າວກວມເອົາການປະເມີນສະພາບການຖ່າຍຊະຊາຍ ແລະ ການແຜ່ຂະຫຍາຍຂອງມົນລະພາວະທີ່ເປັນພິດຂອງອາຈົມທີ່ເຂົ້າປາກ ເຊິ່ງສິ່ງຜົນສະທ້ອນທີ່ບໍ່ດີຕໍ່ທຸກໆຄົນ. ວິທີການແບບ ຊີແອວທີເອັດສ໌ ຈະເຮັດໃຫ້ຊຸມຊົນເກີດຄວາມລະອາຍໃຈ ແລະ ຂີ້ດຽດຕໍ່ສິ່ງເປື້ອນເປິະພາຍໃນຊຸມຊົນເອງ. ພວກເຂົາເຈົ້າຈະຄຳນຶງເຖິງຜົນສະທ້ອນອັນບໍ່ດີຂອງການຖ່າຍຊະຊາຍໃນຊຸມຊົນ: ພວກເຂົາເຈົ້າເລີ່ມເຂົ້າໃຈວ່າຕົນເອງຍັງຈະຄົງສືບຕໍ່ດົມກິ່ນອາຈົມຂອງຄົນອື່ນ ຖ້າຫາກວ່າພຶດຕິກຳການຖ່າຍຊະຊາຍຫາກຍັງສືບຕໍ່ໄປ. ສິ່ງນີ້ຈະປຸກລະດົມໃຫ້ຄົນໃນຊຸມຊົນຫັນປ່ຽນພຶດຕິກຳທີ່ຈະເຮັດໃຫ້ມີການປັບປຸງສະພາບສຸຂະອະນາໄມໃນຊຸມຊົນໃຫ້ດີຂຶ້ນ.

ຖ້າມີການນຳພາທີ່ຖືກຕ້ອງເໝາະສົມ, ຊີແອວທີເອັດສ໌ ສາມາດກະຕຸ້ນໃຫ້ມີການຢຸດຕິພຶດຕິກຳການຖ່າຍຊະຊາຍໄດ້ຢ່າງສິ້ນເຊີງ ໂດຍບໍ່ຈຳເປັນຕ້ອງອາໄສເງິນຊ່ວຍເຫຼືອ ຫຼື ການສັ່ງຊື້ວິດຖ່າຍຕົ້ນແບບຈາກໂຄງການສຸຂາພິບານ ພາຍນອກ. ຫລັງຈາກທີ່ຈຸດປະກາຍແລ້ວ, ຊີແອວທີເອັດສ໌ ຈະກະຕຸ້ນໃຫ້ຄົນໃນຊຸມຊົນເລີ່ມລົງມືຂຸດຂຸມສ້າງວິດຖ່າຍດ້ວຍໂຕເອງ. ຫຼາຍຄອບຄົວເລີ່ມສ້າງວິດຖ່າຍດ້ວຍງົບປະມານ/ອຸປະກອນທີ່ເຂົາເຈົ້າມີ ຫຼື ເລີ່ມໃຊ້ຮ່ວມກັນກັບຜູ້ອື່ນ ເພື່ອເຮັດໃຫ້ໝູ່ບ້ານຂອງຕົນເອງກາຍເປັນບ້ານທີ່ນຳໃຊ້ສ້ວມຖ່າຍ 100 ເປີເຊັນເຕັມ. ເມື່ອເຮັດສຳເລັດເຊັ່ນນັ້ນແລ້ວ, ຄະນະກຳມະການຊຸມຊົນ ກໍ່ຈະຕັ້ງປ້າຍຢູ່ໜ້າທາງເຂົ້າໝູ່ບ້ານ ເຊິ່ງຂໍ້ຄວາມຂຽນວ່າ ບ້ານພວກເຮົາບໍ່ມີບຸກຄົນໃດຖ່າຍຊະຊາຍ ແລະ ພວກເຂົາກໍ່ຈະບໍ່ຍອມໃຫ້ບຸກຄົນໃດຖ່າຍຊະຊາຍ ອີກຕໍ່ໄປ.

ວິທີການ ຊີແອວທີເອັດສ໌ ໄດ້ເລີ່ມຕົ້ນນຳໃຊ້ໃນປີ 1999 ໂດຍທ່ານຄາມໍ ກາ ກຳລັງເຮັດວຽກກັບສູນຂໍ້ມູນການສຶກສາຂັ້ນບ້ານ (VERC) ແລະ ໄດ້ຮັບການສະໜັບສະໜູນໂດຍອົງການຊ່ວຍເຫຼືອກ່ຽວກັບນໍ້າ (Water Aid) ໃນໝູ່ບ້ານນ້ອຍໆແຫ່ງໜຶ່ງ ຂອງເມືອງຣາຊາຣີ ປະເທດບັງກະລາເດດ. ຫຼັງຈາກນັ້ນເປັນຕົ້ນມາ ວິທີການ ຊີແອວທີເອັດສ໌ ກໍ່ໄດ້ແຜ່ຂະຫຍາຍໄປຍັງຫລາຍໆປະເທດໃນຂົງເຂດທະວີບອາຊີ, ອາຟຣິກາ ແລະ ອາເມລິກາລາຕິນ ພ້ອມຍັງຖືກຮັບຮອງໃຊ້ໂດຍລັດຖະບານ ແລະ ອົງການພັດທະນາທີ່ສຳຄັນອື່ນໆອີກ. ຊີແອວທີເອັດສ໌ ໄດ້ກາຍເປັນແນວຄວາມຄິດແບບຢ່າງແລະໄດ້ແຜ່ຂະຫຍາຍອອກໄປຢ່າງໄວວາເນື່ອງຈາກເປັນໂຄງການທີ່ໃຊ້ຕົ້ນທຶນທີ່ຕໍ່າ (ບໍ່ຈຳເປັນຕ້ອງໃຊ້ທຶນຊ່ວຍເຫລືອໃດໆ). ປັດໃຈສຳຄັນໃນການບັນລຸຜົນໃນການນຳໃຊ້ ວິທີການ ຊີແອວທີເອັດສ໌ ແມ່ນການອຳນວຍຄວາມສະດວກ/ນຳພາທີ່ມີຄຸນນະພາບ.

ຄູ່ມືນີ້ມີຈຸດປະສົງທີ່ຈະຊ່ວຍພະນັກງານແກນນຳ ແລະ ຜູ້ອຳນວຍຄວາມສະດວກໃນພາກສະໜາມ ເພື່ອໃຫ້ເຂົ້າໃຈເຖິງປັດຊະຍາ ແລະ ຫລັກການພື້ນຖານຂອງ ຊີແອວທີເອັດສ໌ ແລະ ສາມາດນຳໃຊ້ເປັນເຄື່ອງມື ແລະ ເຕັກນິກການ ຝຶກຊ້ອມຕົວຈິງໄດ້ຢ່າງຖືກຕ້ອງ ແລະ ເໝາະສົມ.

## ຈະຈຸດປະກາຍ ຊີແອວທີເອັດສ໌ ແນວໃດ

ຊີແອວທີເອັດສ໌ ອີງໃສ່ການກະຕຸ້ນຄວາມຮູ້ສຶກຂີ້ດຽດ ແລະ ຄວາມລະອາຍໃຈຂອງຄົນໃນຊຸມຊົນ ເນື່ອງຈາກວ່າເຂົາເຈົ້າຕ້ອງປະເຊີນໜ້າກັບຄວາມເປັນຈິງກ່ຽວກັບການຖ່າຍຊະຊາຍ ແລະ ຜົນກະທົບທີ່ບໍ່ດີຕໍ່ຊຸມຊົນທັງໝົດ. ຂໍ້ສົມມຸດພື້ນຖານກໍ່ຄືວ່າບໍ່ມີມະນຸດຄົນໃດສາມາດຕິດຢູ່ກັບທີ່ໄດ້ຖ້າຮູ້ວ່າຕົນເອງກຳລັງສືບດົມກິນອາຈົມຂອງຄົນອື່ນຢູ່. ໂດຍປົກກະຕິແລ້ວ, ບັນດາຊຸມຊົນຕ່າງໆຈະພະຍາຍາມ ທຸກຄວາມສາມາດ ເພື່ອຊອກຫາທຸກວິຖີທາງ ໃນການປ່ຽນແປງແນວຄວາມຄິດອັນນີ້ດ້ວຍຕົນເອງ.

ຊີແອວທີເອັດສ໌ ຈະບໍ່ອາໃສທຶນຊ່ວຍເຫຼືອ ຈາກພາຍນອກ. ທຶນຊ່ວຍເຫຼືອນີ້ ຈະເຮັດໃຫ້ເກີດມີທັດສະນະຄະຕິທີ່ມັກແຕ່ການເພິ່ງພາອາໃສຜູ້ອື່ນ ແລະ ຄວາມຄາດຫວັງຈາກພາຍນອກເທົ່ານັ້ນ. ຊີແອວທີເອັດສ໌ ບໍ່ໄດ້ບົ່ງບອກເຖິງຮູບແບບຂອງສ້ວມຖ່າຍ, ແຕ່ວ່າມັນແມ່ນການກະຕຸກຊຸກຍູ້ແນວຄວາມຄິດລິເລີ່ມ ແລະ ການສ້າງຂີດຄວາມສາມາດຂອງຊຸມຊົນ. ຈຸດປະສົງກໍ່ເພື່ອຈຸດປະກາຍ ແລະ ສະໜັບສະໜູນ ເຮັດໃຫ້ຄົນເກີດມີຄວາມຕ້ອງການຢາກ ປ່ຽນແປງພຶດຕິກຳຂອງຕົນ.

ກຸ່ມຄົນບາງສ່ວນຂອງຊຸມຊົນ ຈະຕ້ອງມີການກະຕຸ້ນເປັນພິເສດ ເພື່ອໃຫ້ເຂົາເຈົ້າປ່ຽນຄວາມສິ້ນເຄີຍຂອງພວກເຂົາເຈົ້າ. ຕົວຢ່າງເຊັ່ນ:

- ຄອບຄົວທີ່ມີວິດຖ່າຍເປັນຂອງຕົນເອງພົບວ່າເຂົາເຈົ້າມີຄວາມສ່ຽງທີ່ຈະໄດ້ຮັບມົນລະພາວະຂອງອາຈົມເຂົ້າທາງປາກ ເນື່ອງຈາກການກະທຳຂອງບຸກຄົນທີ່ບໍ່ໄດ້ໃຊ້ວິດຖ່າຍ.
- ບຸກຄົນທີ່ບໍ່ມີດິນເປັນຂອງຕົນເອງມັກຈະຖືກຕຳນິວິຈານ ແລະ ຖືກໃສ່ຮ້າຍວ່າໄປຖ່າຍໃສ່ດິນແດນຂອງຄົນອື່ນ.
- ແມ່ຍິງ ແລະ ຍິງສາວບໍ່ມີຄວາມເປັນສ່ວນຕົວໃນເວລາຖ່າຍກາງແຈ້ງ.
- ຜູ້ນຳສາດສະໜາເຂົ້າໃຈວ່າມັນບໍ່ມີຄວາມໝາຍຫຍັງທີ່ຄົນຈະນຸ່ງເຄື່ອງງາມແຕ່ເຮັດເປິະເປື້ອນດ້ວຍການ ຖ່າຍຊະຊາຍ.

ຄວນເອົາໃຈໃສ່ກະຕຸກຊຸກຍູ້ກຸ່ມຄົນທີ່ກ່າວມາຂ້າງເທິງນັ້ນເປັນພິເສດ ເພື່ອເປັນກ້ອນກຳລັງໃນການກະຕຸກຊຸກຍູ້ຄົນອື່ນໆໃນຊຸມຊົນ ໃຫ້ມີການປ່ຽນແປງ ຄວາມຊິນເຄີຍຂອງເຂົາເຈົ້າຢ່າງສິ້ນເຊີງ.

---

**ຂໍ້ແນະນຳ:** ກຸນແຈສຳຄັນເພື່ອໃຫ້ບັນລຸຜົນສຳເລັດກໍ່ຄືທັດສະນະຄະຕິ ແລະ ວິທີການເຂົ້າເຖິງຊຸມຊົນຂອງຜູ້ປະສານງານ ຫຼື ພະນັກງານສົ່ງເສີມພາກສະໜາມ ນັ້ນເອງ.

---

ຈຸດປະສົງຂອງ ຊີແອວທີເອັດສ໌ ກໍ່ເພື່ອກະຕຸ້ນປະຊາຊົນໃຫ້ຮູ້ດ້ວຍຕົນເອງວ່າເຂົາເຈົ້າຈຳເປັນຕ້ອງໄດ້ປ່ຽນພຶດຕິກຳຂອງ ຕົນເອງ ສະນັ້ນ ພະນັກງານສົ່ງເສີມພາກສະໜາມ ບໍ່ຈຳເປັນຕ້ອງບັນຍາຍ ຫລື ໃຫ້ຄຳແນະນຳໃດໆກ່ຽວກັບນິໄສການເຂົ້າຫ້ອງນ້ຳ ແລະ ບໍ່ຄວນໃຫ້ຄຳຕອບໃດໆກ່ຽວກັບຮູບແບບຂອງສ້ວມຖ່າຍ. ໜ້າທີ່ຫຼັກຂອງຜູ້ປະສານງານ ຫຼື ພະນັກງານສົ່ງເສີມກໍ່ຄືຊ່ວຍໃຫ້ຄົນໃນຊຸມຊົນໄດ້ຮັບຮູ້ດ້ວຍຕົວຂອງເຂົາເຈົ້າເອງວ່າການຖ່າຍຊະຊາຍມັນເປັນໜ້າລັງກຽດຂະໜາດໃດ ພ້ອມກັນນັ້ນມັນເຮັດໃຫ້ສະພາບແວດລ້ອມເຊື່ອມໂຊມລົງອີກດ້ວຍ. ດັ່ງນັ້ນມັນຈຶ່ງເປັນໜ້າທີ່ຂອງຄົນໃນຊຸມຊົນທີ່ຈະຕັດສິນໃຈວ່າຈະແກ້ໄຂບັນຫາແນວໃດ ແລະ ດຳເນີນການແນວໃດ.

## ການລຽງລຳດັບຂອງຂັ້ນຕອນຕ່າງໆ

ຂໍ້ມູນຕໍ່ໄປນີ້ກໍ່ຄືລຳດັບຂອງຂັ້ນຕອນຕ່າງໆທີ່ສາມາດປະຕິບັດຕາມໄດ້ ພ້ອມກັນນັ້ນມັນກໍ່ຄືເຄື່ອງມືທີ່ສາມາດນຳໃຊ້ເຂົ້າໃນການກະຕຸ້ນ ຊີແອວທີເອັດສ໌ ໃນບ້ານຕ່າງໆໄດ້. ສິ່ງນີ້ບໍ່ແມ່ນຫົນທາງດຽວໃນການສົ່ງເສີມ ຊີແອວທີເອັດສ໌, ແຕ່ວ່າມັນຍັງມີຫລາຍໆປັດໃຈທີ່ສຳຄັນ ແລະ ຈຳເປັນຕ້ອງໄດ້ເນັ້ນໜັກ. ທ່ານສາມາດດັດແກ້ຄູ່ມືນີ້ໄດ້ເພື່ອໃຫ້ມັນ ເໝາະສົມກັບສະພາບທ້ອງຖິ່ນໃນແຕ່ລະບ່ອນ, ແຕ່ວ່າ **ສິ່ງທີ່ຕ້ອງເຮັດ** ແລະ **ຂໍ້ຫ້າມ** ນັ້ນຖືວ່າສຳຄັນ ແລະ ຄວນໃສ່ໃຈ.

**ຂັ້ນຕອນທີ່ຈະຕ້ອງປະຕິບັດຕາມເພື່ອກະຕຸ້ນ** ຊີແອວທີເອັດສ໌

1. ການແນະນຳ ແລະ ການສ້າງຄວາມສຳພັນອັນດີງາມ
2. ການວິເຄາະແບບມີສ່ວນຮ່ວມ
3. ຊ່ວງເວລາຈຸດປະກາຍ
4. ການສ້າງແຜນງານໂດຍຊຸມຊົນ
5. ການຕິດຕາມ

## ການແນະນຳ ແລະ ການສ້າງຄວາມສຳພັນອັນດີງາມ

ຂັ້ນຕອນທຳອິດກໍ່ຄືໃນເວລາທີ່ທ່ານມາຮອດໝູ່ບ້ານແລ້ວນັ້ນ ທ່ານຈຳເປັນຕ້ອງໄດ້ອະທິບາຍເຖິງຈຸດປະ ສົງຂອງການມາຢ້ຽມຢາມໃນຄັ້ງນີ້ ພ້ອມທັງການສ້າງສາຍສຳພັນອັນດີງາມກັບຄົນໃນຊຸມຊົນ. ໃນເວລາທີ່ ຊີແອວທີເອັດສ໌ ໄດ້ເລີ່ມຕົ້ນນັ້ນ, ຊີແອວທີເອັດສ໌ ໄດ້ຖືກດຳເນີນໃນບ້ານທີ່ມີໂຄງການຂອງອົງການທີ່ບໍ່ສັງ ກັດລັດຖະບານ (NGO) ຢູ່ແລ້ວ ແລະ ອົງການດັ່ງກ່າວກໍ່ໄດ້ສ້າງສາຍສຳພັນອັນດີງາມກັບຊຸມຊົນເປັນທີ່ຮຽບຮ້ອຍແລ້ວ. ຖ້າຫາກວ່າບໍ່ຕົກຢູ່ໃນກໍລະນີນີ້, ທ່ານຈະຕ້ອງໄດ້ໃຊ້ເວລາຫລາຍກວ່າເກົ່າ ເພື່ອອະທິບາຍວ່າທ່ານມານີ້ເພື່ອຈຸດປະສົງຫຍັງ.





ທ່ານສາມາດເລີ່ມໂອ້ລົມກັບຊາວບ້ານສອງສາມຄົນໃນຊຸມຊົນໃນຂະນະທີ່ກຳລັງຍ່າງຜ່ານໝູ່ບ້ານ (ຍ່າງສຳຫຼວດ). ຈຸດປະສົງກໍ່ເພື່ອກະຕຸ້ນໃຫ້ຊາວບ້ານອະທິບາຍສະພາບດ້ານການຮັກສາອະນາໄມຂອງຊຸມຊົນໂດຍລວມໃຫ້ຫລາຍກວ່າເກົ່າ. ມີຫລາຍໆວິທີທາງທີ່ຈະເລີ່ມຕົ້ນການສົນທະນາກ່ຽວກັບການຖ່າຍຊະຊາຍກາງແຈ້ງ ແລະ ຄວາມສະອາດຂອງບ້ານ. ທ່ານອາດຈະເລີ່ມສົນທະນາກັບຊາວບ້ານສອງສາມຄົນທີ່ທ່ານໄດ້ພົບໃນຕອນທີ່ຍ່າງເຂົ້າມາໃນໝູ່ບ້ານ ແລະ ທ່ານກໍ່ອາດຈະຂໍຮ້ອງໃຫ້ເຂົາເຈົ້າຍ່າງມານຳທ່ານເພື່ອໄປດ້ານຫຼັງຂອງບ້ານ, ໄປທີ່ພຸ່ມໄມ້, ໄປໃກ້ແມ່ນ້ຳ ຫລື ພື້ນທີ່ເປີດແປນທີ່ຄົນມັກໄປຖ່າຍໃສ່. ການຍ່າງສຳຫລວດ ໃນຂັ້ນຕົ້ນອາດຈະມີພົບປະກັນຂອງຊາວບ້ານສອງສາມຄົນເຂົ້າຮ່ວມໜ້ອຍ ແຕ່ເມື່ອໄປຫຼາຍບ່ອນ ຈະເຮັດໃຫ້ຊາວບ້ານໃນທີ່ແປກໆນັ້ນຈະສ້າງຄວາມສົນໃຈໃຫ້ຜູ້ອື່ນສົນໃຈ ແລະ ເຂົ້າຮ່ວມໃນບໍ່ຊ້ານີ້ ຫລາຍຂື້ນ. ທ່ານອາດຈະເລີ່ມຕັ້ງຄຳຖາມເຊັ່ນ: ‘ນີ້ແມ່ນຂີ້ຂອງຜູ້ໃດ?’ ແລ້ວຖາມຄົນໃນກຸ່ມໃຫ້ຍົກມືຂື້ນຖ້າຫາກວ່າ ມື້ນີ້ເຂົາເຈົ້າໄດ້ຖ່າຍຊະຊາຍກາງແຈ້ງ ແລະ ບອກໃຫ້ເຂົາເຈົ້າພາໄປບ່ອນທີ່ເຂົາເຈົ້າໄດ້ຖ່າຍໃສ່ໃນຕອນເຊົ້ານີ້ ແລະ ເບິ່ງວ່າອາຈົມຍັງຢູ່ຈຸດນັ້ນຫລືບໍ່. ຫຼາຍຄົນອາດຈະເວົ້າວ່າບໍ່ເຫັນອາຈົມຢູ່ບ່ອນນັ້ນແລ້ວ. ເມື່ອທ່ານຖາມຕໍ່ໄປວ່າເປັນຫຍັງຈຶ່ງບໍ່ຢູ່ນັ້ນ, ບາງຄົນກໍ່ຈະຕອບວ່າ ໝາຫລືໝູກິນອາຈົມນັ້ນແລ້ວ. ທ່ານອາດຖາມຕໍ່ໄປວ່າ ໝາຂອງໃຜທີ່ກິນ? ຖາມອີກວ່າເວລາໝາກັບມາທີ່ບ້ານ, ມັນມີກິ່ນຫຍັງຕິດມານຳບໍ ແລະ ໝາໄດ້ເລຍສະມາຊິກໃນຄອບຄົວ ຫຼື ວ່າໄດ້ຫລີ້ນນຳລູກຫລານເຈົ້າບໍ່? ເມື່ອພວກເຂົາເຈົ້າເກີດຄວາມສົນໃຈຕໍ່ສິ່ງເຫລົ່ານີ້ແລ້ວທ່ານສາມາດກະຕຸກຊຸກຍູ້ໃຫ້ເຂົາເຈົ້າຮ້ອງສະມາຊິກຄົນອື່ນໆໃນຊຸມຊົນໃຫ້ເຂົ້າມາຮັບຟັງນຳກັນ. ທ່ານຈະຕ້ອງໄດ້ຊອກຫາສະຖານທີ່ທີ່ກວ້າງຂວາງພໍສຳລັບກຸ່ມຄົນຈຳນວນຫຼາຍໃຫ້ເຂົາເຈົ້າສາມາດຢືນຫຼືນັ່ງແລະເຮັດວຽກນຳກັນໄດ້.

ຖ້າຫາກມີຄົນຖາມວ່າທ່ານມາເຮັດຫຍັງໃນຄັ້ງນີ້, ທ່ານອາດຕອບໄປວ່າທ່ານແລະທີມງານຂອງທ່ານກຳລັງສຳ ຫຼວດສະພາບການສຸຂະອະນາໄມຂອງບ້ານຕ່າງໆໃນເມືອງນີ້. ທ່ານກຳລັງຄົ້ນຫາວ່າຈຳນວນຂອງບ້ານທີ່ມີປະຊາຊົນທີ່ມີພຶດຕິກຳຖ່າຍຊະຊາຍ ແລະ ຢາກຮູ້ວ່າມີປະຊາຊົນກຳລັງລໍຖ້າຄວາມຊ່ວຍເຫຼືອຈາກພາຍນອກກ່ອນຈຶ່ງຈະມີການປ່ຽນແປງ ແລະ ມີຈັກບ້ານທີ່ໄດ້ຫຼຸດພົ້ນຈາກສະພາບບໍ່ມີອະນາໄມໂດຍການລິເລີ່ມຂອງເຂົາເຈົ້າເອງ.

**ສິ່ງທີ່ຄວນເຮັດ:** ຖາມປະຊາຊົນເຖິງພາສາທ້ອງຖິ່ນຂອງຄຳວ່າ ‘ອາຈົມ’ ແລະ ‘ການຖ່າຍ’ ວ່າເວົ້າແນວໃດ ແລະ ໃຫ້ໃຊ້ຄຳດັ່ງກ່າວຕະຫລອດເວລາ. ບໍ່ໃຫ້ໃຊ້ຄຳທີ່ສຸພາບ, ມ່ວນຫູ ແຕ່ໃຫ້ໃຊ້ຄຳຫຍາບທີ່ຄົນທ້ອງຖິ່ນເວົ້າກັນຕະ ຫລອດຂັ້ນຕອນການນຳພາ.

**ສິ່ງທີ່ບໍ່ຄວນເຮັດ:** ຢ່າຄິດວ່າທ່ານມາທີ່ນີ້ເພື່ອໂຄສະນາອົບຮົມປະຊາຊົນ, ປ່ຽນແປງພຶດຕິກຳຂອງເຂົາເຈົ້າ ຫລື ເພື່ອນຳສະເໜີການຊ່ວຍເຫຼືອທຶນໃນດ້ານໃດໜຶ່ງ. ສິ່ງດຽວທີ່ທ່ານມາຢູ່ຈຸດນີ້ກໍ່ເພື່ອຊ່ວຍເຫຼືອຊຸມຊົນໃຫ້ຈັດຕັ້ງການວິເຄາະສະພາບສຸຂະອະນາໄມຂອງເຂົາເຈົ້າເອງ.

  

## ວິທີການດຳເນີນການວິເຄາະສຸຂະອະນາໄມຂອງຊຸມຊົນ

ເມື່ອທ່ານໄດ້ຮັບຄວາມສົນໃຈ ຈາກຊຸມຊົນແລ້ວ, ບາດກ້າວຕໍ່ໄປແມ່ນການອຳນວຍຄວາມສະດວກໃຫ້ແກ່ການວິເຄາະສຸຂະອະນາໄມເຊິ່ງຊຸມຊົນທ້ອງຖິ່ນນັ້ນເອງຈະນຳໃຊ້ເຄື່ອງມື ແລະ ວິທີການ ການປະເມີນຜົນແບບມີສ່ວນຮ່ວມ ຫຼື ພີອາເອ-PRA[1].

**ຂໍ້ແນະນຳ: ທ່ານອາດເລີ່ມ** ຊີແອວທີເອັດສ໌ ພີອາເອ-PRA ດ້ວຍການຕັ້ງຄຳຖາມເຊັ່ນ: ມີໃຜແດ່ທີ່ໄດ້ຖ່າຍຊະຊາຍໃນບ້ານຂອງທ່ານໃນມື້ນີ້? ແລະ ທ່ານໄດ້ພົບເຫັນ ຫຼື ໄດ້ກິ່ນເໝັນອາຈົມຂອງຄົນໃນບ້ານຂອງທ່ານບໍ່ໃນມື້ນີ້?" ດ້ວຍການຍົກມືຂຶ້ນ

ນີ້ເປັນແນວຄວາມຄິດສຳລັບວິທີການແລະຄຳຖາມຕ່າງໆ ທີ່ທ່ານອາດນຳໄປໃຊ້ເພື່ອດຳເນີນການວິເຄາະ. ລຳ ດັບຂອງວິທີການທີ່ນຳໃຊ້ເພື່ອການວິເຄາະສະພາບການນັ້ນບໍ່ຖືວ່າສຳຄັນ, ແຕ່ວິທີການຍ່າງສຳຫຼວດຈະໄດ້ຮັບປະສິດທິຜົນຫຼາຍກວ່າ. ທ່ານຄວນຈະທົດລອງວິທີໃໝ່ໃດໜຶ່ງທີ່ນອກເໜືອຈາກວິທີທີ່ໄດ້ກ່າວມາຂ້າງເທິງນັ້ນ. ຄວນຈື່ໄວ້ວ່າເປົ້າໝາຍກໍ່ຄືຊ່ວຍປະຊາຊົນໄດ້ຮູ້ວ່າພຶດຕິກຳຂອງເຂົາເຈົ້າກ່ຽວກັບສຸຂະອານະໄມນີ້ມັນຖືກຕ້ອງ ແລະ ບໍ່ຖືກຕ້ອງແນວໃດ ແລະ ຊ່ວຍເຂົາເຈົ້າຕັດສິນໃຈວ່າເຂົາເຈົ້າຈຳເປັນຕ້ອງໄດ້ປ່ຽນແປງພຶດຕິກຳຫຼືບໍ່. ສະນັ້ນມັນບໍ່ແມ່ນທ່ານທີ່ຈະຕ້ອງໄປບອກ ຫຼື ສອນເຂົາເຈົ້າ.

### *ການຍ່າງສຳຫຼວດ*

ການຍ່າງສຳຫຼວດໝາຍເຖິງການຍ່າງໄປເບິ່ງຕາມສະຖານທີ່ຕ່າງໆທົ່ວບ້ານກັບຊາວບ້ານຈາກບ່ອນໜຶ່ງໄປອີກບ່ອນໜຶ່ງ ເພື່ອສັງເກດເບິ່ງ, ສອບຖາມ ແລະ ຮັບຟັງ. ໃນເວລາທີ່ລົງໄປຍ່າງເພື່ອກວດເບິ່ງນັ້ນ, ທ່ານອາດຊີ້ໃຫ້ຮູ້ວ່າບ່ອນໃດສາມາດຖ່າຍຊະຊາຍໄດ້ ແລະ ອາດໄປເບິ່ງສວ້ມຖ່າຍປະເພດຕ່າງໆໄດ້ຕາມເສັ້ນທາງທີ່ທ່ານຍ່າງ. ມັນເປັນສິ່ງທີ່ສຳຄັນທີ່ທ່ານອາດຈະຢຸດເບິ່ງເຂດພື້ນທີ່ທີ່ມີການຖ່າຍຊະຊາຍ ແລະ ໃຊ້ເວລາເລັກນ້ອຍເພື່ອສອບຖາມ ແລະ ຄິດໄລ່ໄປນຳ (ເຊິ່ງໄດ້ອະທິບາຍລຸ່ມນີ້) ໃນເວລາທີ່ທ່ານກຳລັງສືບດົມເອົາກິ່ນທີ່ບໍ່ເພິງປາດຖະໜາ ແລະ ເຫັນກອງອາຈົມທີ່ກອງກັນຢ່າງຊະຊາຍນັ້ນ. ຖ້າມີຄົນຊວນທ່ານໄປຈາກບ່ອນນັ້ນ ທ່ານຕ້ອງຢືນຢັນທີ່ຈະຢູ່ຕໍ່ໄປໂດຍບໍ່ຕ້ອງອາຍ. ການທີ່ປະສົບພົບເຫັນ ແລະ ໄດ້ກິ່ນໃນສິ່ງທີ່ບໍ່ປາດຖະໜາ ໂດຍທີ່ມີຜູ້ລົງມາຢ້ຽມຢາມສະຖານທີ່ນຳນັ້ນ ຖືວ່າເປັນປັດໄຈກະຕຸ້ນໃຫ້ເກີດມີການປຸກລະດົມຂຶ້ນ.

**ຂໍ້ແນະນຳ:** ໃນເວລາຍ່າງສຳຫຼວດນັ້ນ, ໃຫ້ຖາມຄຳຖາມວ່າຄອບຄົວໃດທີ່ມາໃຊ້ພື້ນທີ່ນີ້ເພື່ອຂັບຖ່າຍ, ແມ່ຍິງໄປຖ່າຍຢູ່ໃສ, ແລະ ເຂົາເຈົ້າຈະເຮັດແນວໃດຖ້າເຈັບທ້ອງປວດຖ່າຍແບບກະທັນຫັນໃນເວລາກາງຄືນ ຫຼື ໃນເວລາທີ່ເກີດມີເຫດການເປັນພະຍາດຖອກທ້ອງ.

**ຂໍ້ແນະນຳ:** ໃນເວລາຍ່າງສຳຫຼວດນັ້ນ ໃຫ້ທັນຄວາມສົນໃຈໄປຫາແມງວັນທີ່ກຳລັງຕອມກອງອາຈົມ ແລະ ໃນເວລາທີ່ເຫັນໄກ່ຕອດກິນອາ ຈົມນັ້ນ. ໃຫ້ຖາມວ່າມີແມງວັນມັກຕອມອາຫານຂອງເຂົາເຈົ້າບໍ່ ຫຼື ທ່ານໄດ້ກິນອາຫານທີ່ປຸງແຕ່ງຈາກໄກ່ທີ່ກິນອາຈົມນັ້ນບໍ່ ແລະ ຖາມວ່າເຂົາເຈົ້າມັກກິນໄກ່ທ້ອງຖິ່ນນັ້ນບໍ່

[1] ເຄື່ອງມື ແລະ ວິທີການ ການປະເມີນຜົນແບບມີສ່ວນຮ່ວມ PRA) ກໍ່ຄືວິທີທີ່ງ່າຍດາຍ, ສັງເກດເຫັນໄດ້ ແລະ ປະຕິບັດຕົວຕົວເພື່ອໃຫ້ຄົນໄດ້ມາສົນທະນາກັນກ່ຽວກັບສະພາບການຂອງຕົນເອງເຊັ່ນ: ການສ້າງແຜນທີ່ ຫຼື ຈັດລຳດັບທາງເລືອກຂອງຕົນ.

ມີຫລາຍວິທີທາງທີ່ຈະຊ່ວຍກະຕຸ້ນໃຫ້ໃນຊຸມຊົນໄດ້ເກີດມີຄວາມຮູ້ສຶກກຽດຊັງຂຶ້ນມາເອົາເອງໂດຍທີ່ບໍ່ຈຳເປັນຕ້ອງໄດ້ບອກ ຫລື ສັ່ງສອນຢ່າງໃດທັງໝົດ. ທ່ານສາມາດໃຊ້ຄຳຖາມທີ່ສ້າງສັນເພື່ອຊ່ວຍໃນການກະຕຸ້ນດັ່ງກ່າວ. ເບິ່ງຕົວຢ່າງໃນຫ້ອງຂ້າງລຸ່ມນີ້.

ການຍ່າງສຳຫລວດແມ່ນເຄື່ອງມືໜຶ່ງທີ່ສຳຄັນໃນການກະຕຸ້ນຊຸມຊົນ. ປະສົບການຄວາມອັບອາຍທີ່ໄດ້ ຈາກການຍ່າງສຳຫລວດນີ້ເອີ້ນວ່າ 'ຄວາມອັບອາຍຈາກການຍ່າງ' ເຊິ່ງມີຜົນໃຫ້ເກີດມີຄວາມຢາກທີ່ຈະຢຸດຕິການຖ່າຍຊະຊາຍໃນທັນທີທັນໃດ ແລະ ກຳຈັດພື້ນທີ່ເປິເປື້ອນດັ່ງກ່າວໃຫ້ໝົດໄປ. ເຖິງແມ່ນວ່າຜູ້ຄົນເຫັນສິ່ງ ສົກກະປົກ ແລະ ອາຈົມທຸກໆມື້, ແຕ່ເຂົາເຈົ້າຈະມີຄວາມຕື່ນຕົວກັບບັນຫາໄດ້ໃນເວລາທີ່ມີຄົນນອກມາບັງຄັບໃຫ້ພວກເຂົາໄດ້ຫຼຽວເບິ່ງ ແລະ ວິເຄາະສະຖານະການຢ່າງລະອຽດເທົ່ານັ້ນ.

  

**ສິ່ງທີ່ບໍ່ຄວນເຮັດ:** ການຫຼີກລ່ຽງພື້ນທີ່ຖ່າຍຊະຊາຍ, ແຕ່ໃຫ້ໃຊ້ເວລາຢູ່ທີ່ນັ້ນໃຫ້ດົນເທົ່າທີ່ຈະເປັນໄປໄດ້ເພື່ອທີ່ຈະໄດ້ຖາມຄຳຖາມຕ່າງໆ, ບັງຄັບໃຫ້ປະຊາຊົນສືບດົມກິ່ນອາຈົມຂອງຕົນເອງ ແລະ ເກີດຄວາມຮູ້ສຶກອຶດອັດທີ່ໄດ້ນຳເອົາຄົນນອກມານະທີ່ນີ້. ນີ້ຈະເປັນການຊ່ວຍເຮັດໃຫ້ເກີດຄວາມຮູ້ສຶກລະອາຍໃຈ ແລະ ຂີ້ດຽດ ຊຶ່ງຈະເຮັດໃຫ້ພວກເຂົາຮູ້ສຶກຢາກປ່ຽນແປງພຶດຕິກຳ

**ຈະກະຕຸ້ນໃຫ້ເກີດຄວາມຮູ້ສຶກຂີ້ດຽດທີ່ໄດ້ບໍລິໂພກອາຈົມຂອງຜູ້ອື່ນໄດ້ແນວໃດ**

ຂໍນ້ຳຈອກໜຶ່ງຈາກຊາວບ້ານ. ເມື່ອຈອກນ້ຳມາຮອດແລ້ວ, ສະເໜີໃຫ້ຄົນໃດໜຶ່ງໃນກຸ່ມຖ້າວ່າເຂົາເຈົ້າສາມາດດື່ມນ້ຳນັ້ນໄດ້. ຖ້າເຂົາເຈົ້າຕອບວ່າສາມາດດື່ມໄດ້ຢ່າງບໍ່ມີບັນຫາ, ຈາກນັ້ນໃຫ້ຖາມຄົນອື່ນໆຕໍ່ໄປຈົນກວ່າທຸກຄົນເຫັນດີນຳກັນວ່າສາມາດດື່ມນ້ຳນັ້ນໄດ້. ຕໍ່ໄປໃຫ້ທ່ານຫຼົກເອົາເສັ້ນຜົມຈາກຫົວຂອງທ່ານ ແລະ ຖາມວ່າມີຫຍັງຢູ່ໃນມືຂອງທ່ານ ເພື່ອຮັບ ປະກັນໃຫ້ພວກເຂົາໄດ້ເຫັນມັນ ກັບຕາຢ່າງຊັດເຈນ. ຈາກນັ້ນເອົາເສັ້ນຜົມດັ່ງກ່າວຈຸ່ມໃສ່ກອງອາຈົມຢູ່ເທິງດິນເພື່ອໃຫ້ທຸກຄົນໃນກຸ່ມໄດ້ເຫັນ. ບາດນີ້ໃຫ້ຈຸ່ມເສັ້ນຜົມຕິດອາຈົມນັ້ນໃສ່ໃນຈອກນ້ຳ ແລະ ຖາມວ່າພວກເຂົາເຫັນຫຍັງແດ່ໃນຈອກນ້ຳນີ້. ຂັ້ນຕໍ່ໄປ, ສະເໜີໃຫ້ຄົນທີ່ຢືນຢູ່ໃກ້ໆທ່ານໃຫ້ດື່ມນ້ຳແກ້ວນັ້ນ. ແນ່ນອນພວກເຂົາຈະປະຕິເສດທີ່ຈະດື່ມນ້ຳຈອກນັ້ນທັນທີ. ສົ່ງນ້ຳຈອກນັ້ນຕໍ່ໄປໃຫ້ຄົນອື່ນໆແລະຖາມຖ້າຫາກເຂົາເຈົ້າສາມາດດື່ມນ້ຳຈອກນັ້ນໄດ້. ບໍ່ມີຜູ້ໃດຢາກທີ່ຈະດື່ມນ້ຳຈອກນັ້ນເລີຍ.

ຖາມພວກເຂົາວ່າເປັນຫຍັງຈຶ່ງປະຕິເສດທີ່ຈະດື່ມນ້ຳຈອກນີ້. ພວກເຂົາກໍ່ຈະຕອບວ່າມັນມີອາຈົມຢູ່ໃນຈອກນ້ຳນີ້. ບາດນີ້ໃຫ້ທ່ານຖາມວ່າແມງວັນມີຈັກຂາ. ບອກພວກເຂົາວ່າມັນມີຫົກຂາ ແລະ ພວກມັນມີແຂ້ວຄ້າຍຄືກັບເລື່ອຍ. ຖາມວ່າແມງວັນສາມາດຕິດເອົາອາຈົມໄດ້ຫຼາຍກວ່າເສັ້ນຜົມຂອງທ່ານບໍ່. ແນ່ນອນພວກເຂົາຕ້ອງຕອບວ່າ 'ແມ່ນແລ້ວ'. ບາດນີ້ໃຫ້ທ່ານຖາມຊາວບ້ານວ່າຈະເກີດຫຍັງຂຶ້ນຖ້າຫາກວ່າແມງວັນດັ່ງກ່າວບິນໄປຈັບໃສ່ອາຫານ ແລະ ຈານເຂົ້າຂອງພວກເຂົາເຈົ້າ, ຫລື ຂອງພວກລູກຫຼານ: ແມງວັນເຫລົ່ານັ້ນໄດ້ນຳຫຍັງຕິດໂຕ

ມາແດ່ຈາກສະຖານທີ່ກາງແຈ້ງທີ່ພວກທ່ານໄດ້ຖ່າຍຊະຊາຍໃສ່? ສຸດທ້າຍກໍ່ໃຫ້ຖາມຊາວບ້ານວ່າພວກເຂົາກິນອາຫານຫັຍງແດ່. ໃນທີ່ສຸດກໍ່ສະຫລຸບໄດ້ວ່າ: ທຸກຄົນໃນໝູ່ບ້ານ ແມ່ນກຳລັງສືບດົມ ແລະ ກິນກິນເອົາອາຈົມຂອງກັນແລະກັນ.

ຖາມຊາວບ້ານໃຫ້ລອງຄິດໄລ່ປະລິມານຂອງອາຈົມທີ່ສືບດົມ ແລະ ກິນກິນເຂົ້າໄປໃນແຕ່ລະມື້ເບິ່ງ. ຖາມພວກເຂົາວ່າຮູ້ສຶກແນວໃດທີ່ໄດ້ສືບດົມ ແລະ ກິນກິນອາຈົມຂອງຜູ້ອື່ນຍ້ອນສາເຫດຂອງການຖ່າຍຊະຊາຍບໍ? ບໍ່ຄວນໃຫ້ຄຳແນະນຳໃດໆໃນຕອນນີ້ ແລ້ວປ່ອຍໃຫ້ຊາວບ້ານໄດ້ຄິດເອົາເອງ ແລະ ໃຫ້ທ່ານເນັ້ນໜັກບັນຫານີ້ຕື່ມໃນຕອນທີ່ທ່ານເຮັດສັງລວມໃນຕອນທ້າຍຂອງການວິເຄາະ.

## *ການເຮັດແຜນທີ່ຂອງພື້ນທີ່ຖ່າຍຊະຊາຍ*

ການເຮັດແຜນທີ່ໝາຍເຖິງການສ້າງແຜນທີ່ທີ່ງ່າຍດາຍຂອງຊຸມຊົນເພື່ອກຳນົດໃຫ້ຮູ້ເຖິງທີ່ຕັ້ງຂອງແຕ່ລະຄົວເຮືອນ, ຊັບພະຍາກອນ ແລະ ບັນຫາຕ່າງໆ, ແລະ ກໍ່ເພື່ອໃຫ້ມີການສົນທະນາກັນຫຼາຍຂຶ້ນ. ມັນເປັນເຄື່ອງມືທີ່ມີປະໂຫຍດເພື່ອເຮັດໃຫ້ສະມາຊິກໃນຊຸມຊົນໄດ້ມີສ່ວນຮ່ວມໃນການຈັດຕັ້ງການວິເຄາະສະພາບສຸຂະອະນາໄມຂອງຊຸມຊົນຢ່າງລະອຽດ. ສະມາຊິກໃນຊຸມຊົນຈະຕ້ອງໄດ້ກຳນົດສະຖານທີ່ກາງແຈ້ງທີ່ກວ້າງພໍສຳລັບແຕ້ມແຜນທີ່.

**ຂໍ້ແນະນຳ:** ທ່ານບໍ່ຈຳເປັນຕ້ອງມີອຸປະກອນໃດໆສຳລັບການແຕ້ມແຜນທີ່. ບອກໃຫ້ຜູ້ເຂົ້າຮ່ວມໃຫ້ໃຊ້ໃບໄມ້, ແກ່ນໝາກໄມ້, ກິ່ງໄມ້ ຫຼື ສິ່ງຂອງທີ່ຫາໄດ້ງ່າຍໃນພື້ນທີ່ເພື່ອສະແດງໃຫ້ເຫັນເຖິງຄວາມແຕກຕ່າງຂອງແຕ່ລະຢ່າງ. ບໍ່ຄວນໃຫ້ຄຳແນະນຳຫຼາຍຈົນເກີນໄປ. ຄວນສະໜັບສະໜູນຄວາມຄິດສ້າງສັນ ແລະ ສ້າງບັນຍາກາດໃຫ້ມ່ວນຊື່ນ.

ໃນບົດຝຶກຫັດແຕ້ມແຜນທີ່, ຄວນຊັກຊວນແຕ່ລະຄົວເຮືອນເຂົ້າຮ່ວມເພື່ອຊີ້ຕຳແໜ່ງເຮືອນຂອງຕົນເອງໃນແຜນທີ່, ຕົວຢ່າງ: ເຮັດເຄື່ອງໝາຍໃສ່ພື້ນດິນຫຼືໝາຍດ້ວຍໃບໄມ້ຫຼືກ້ອນຫີນ ແລະ ຊີ້ໃຫ້ຮູ້ວ່າຄອບຄົວຕົນມີສ້ວມຖ່າຍ ຫຼືບໍ່. ໃຫ້ເຮັດເຄື່ອງໝາຍ ແລະ ຂີດເສັ້ນເຊື່ອມຕໍ່ລະຫວ່າງພື້ນທີ່ທີ່ປະຊາຊົນຖ່າຍໃສ່ກັບຄົວເຮືອນທີ່ຢູ່ອາໄສ. ແຜນທີ່ສາມາດໃຊ້ເພື່ອສະແດງສິ່ງທີ່ສຳຄັນຫຼາຍໆສິ່ງ. ຫັນຄວາມສົນໃຈວ່າເຂົາເຈົ້າຕ້ອງຍ່າງເປັນໄລຍະທາງໄກປານໃດເພື່ອທີ່ຈະໄປຖ່າຍ ແລະ ໃນເວລາໃດ. ມີບັນຫາກ່ຽວກັບຄວາມປອດໄພຫຍັງແດ່? ໃຫ້ຖາມປະຊາຊົນເພື່ອສຳຫຼວດຫາແຫຼ່ງອາຈົມທີ່ໄຫຼລົງໄປໃສ່ໜອງນ້ຳ ຫຼື ແຫຼ່ງນ້ຳອື່ນໆ ທີ່ເຮັດໃຫ້ນ້ຳເສຍ.

**ສິ່ງທີ່ຄວນເຮັດ:** ໃຫ້ສຳພາດຄົນເພື່ອສ້າງແຜນທີ່. ສິ່ງດັ່ງກ່າວນີ້ໝາຍເຖິງການສອບຖາມ ແລະ ຄົ້ນຫາຄວາມໝາຍຂອງສິ່ງທີ່ສະແດງໃຫ້ເຫັນ (ເບິ່ງຕາຕະລາງລຸ່ມນີ້). ແຜນທີ່ດັ່ງກ່າວຄວນເປັນພາຫະນະທີ່ເຮັດໃຫ້ຊຸມຊົນໄດ້ມີຄວາມເຂົ້າໃຈເລິກເຊິ່ງກວ່າເກົ່າກ່ຽວກັບ ສະພາບສຸຂະອະນາໄມ.

**ການຄົ້ນຫາເພື່ອນບ້ານທີ່ມີຄວາມເປື້ອນເປິະທີ່ສຸດ**

ໃນລະຫວ່າງການເຮັດແຜນທີ່ນັ້ນ ໃຫ້ຄົນໃນຊຸມຊົນຢືນເປັນກຸ່ມນ້ອຍໆໂດຍອີງຕາມລຳດັບເພື່ອນບ້ານໃກ້ຄຽງທີ່ສຸດ. ໃຫ້ພວກເຂົາສົນທະນາກັນພາຍໃນກຸ່ມວ່າເພື່ອນບ້ານຜູ້ໃດເປື້ອນເປິະທີ່ສຸດ, ເປື້ອນເປິະອັນດັບສອງ ແລະ ອັນດັບຕໍ່ໄປ ແລະ ໃຫ້ຂຽນຄຳຕອບດັ່ງກ່າວໃສ່ໃນແຜ່ນເຈັ້ຍໄວ້. ອ່ານຄຳຕອບທີ່ຂຽນໄວ້ໃນເຈັ້ຍແຜ່ນຕ່າງໆ ແລະ ທ່ານຈະພົບວ່າທຸກໆກຸ່ມກຳນົດໜຶ່ງຫຼືສອງເພື່ອນບ້ານດຽວກັນທີ່ມີຄວາມເປິະເປື້ອນທີ່ສຸດ. ຫຼັງຈາກນັ້ນໃຫ້ຖາມກຸ່ມໃຫ້ຂຽນສະຖານທີ່ເຂົາເຈົ້າໄປຖ່າຍລົງ. ດ້ວຍການເຮັດຝຶກຫັດ ແບບນີ້ເຮັດໃຫ້ບ້ານໃກ້ຄຽງກັບຄອບຄົວທີ່ເປື້ອນເປິະທີ່ສຸດນັ້ນຮູ້ວ່າຄົນອື່ນອາໃສຢູ່ໃກ້ກັບເຂດພື້ນທີ່ຂອງຕົນ ແລະ ເຮັດເຄື່ອງໝາຍໃຫ້ເພື່ອນບ້ານນັ້ນເປັນເພື່ອນບ້ານທີ່ເປື້ອນເປິະທີ່ສຸດ. ການຄົ້ນພົບດັ່ງກ່າວມັກຈະກະຕຸ້ນໃຫ້ເກີດມີການຢຸດຢັ້ງບໍ່ໃຫ້ຄົນແປກໜ້າເຂົ້າມາຖ່າຍໃນເຂດດິນຂອງຕົນ. ຫຼັງຈາກທີ່ຮູ້ໄດ້ແນວນັ້ນ, ຊາວບ້ານທີ່ທຸກຍາກ, ມີຖານະໃນສັງຄົມທີ່ຕ່ຳກວ່າ ແລະ ບໍ່ມີຕອນດິນເປັນຂອງຕົນເອງນັ້ນຈະເຮັດໃຫ້ເຮົາເຫັນວ່າເຂົາເຈົ້າເປັນຜູ້ລິເລີ່ມທີ່ຫ້າວຫັນ ແລະ ໄວທີ່ສຸດໃນຊີແອວທີເອັດສ໌. ນອກຈາກນີ້ ເຂົາເຈົ້າເປັນບຸກຄົນທີ່ໄດ້ຮັບຜົນປະໂຫຍດທັງໝົດຈາກການປະຫຍັດເງິນໄດ້ຈາກການປິ່ນປົວພະຍາດຖອກທ້ອງ ແລະ ອື່ນໆ

**ຂໍ້ແນະນຳ:** ແຜນທີ່ທີ່ສ້າງຂຶ້ນເທິງພື້ນດິນນັ້ນສາມາດຖືກບັນທຶກລົງໃນເອກະສານໄດ້ ໂດຍແຕ້ມເອົາຄອບຄົວຜູ້ທີ່ມີສວ້ມຖ່າຍ ແລະ ຜູ້ບໍ່ມີ. ຫຼັງຈາກນັ້ນມັນກໍ່ອາດຈະສາມາດໄປຕິດສະແດງຕາມຫ້ອງການບ້ານ ຫຼື ຕາມສະຖານທີ່ທີ່ຄົນມັກເຫັນ. ສິ່ງດັ່ງກ່າວເປັນການເຕືອນໃຫ້ ຄົນອື່ນໄດ້ຮູ້ວ່າຕ້ອງໄດ້ແກ້ໄຂບັນຫາດັ່ງກ່າວ. ໃນເວລາທີ່ປະຊາຊົນໄດ້ໃຊ້ຫ້ອງນ້ຳ (ບໍ່ວ່າຈະເປັນຂອງຕົນເອງຫຼືໃຊ້ຮ່ວມກັບຄົນອື່ນ) ແລະ ໄດ້ຢຸດເຊົາຖ່າຍຊະຊາຍແລ້ວ, ເຂົາເຈົ້າສາມາດຂີດແປງເຄື່ອງໝາຍເທິງແຜນທີ່ນັ້ນໄດ້ ດ້ວຍສີທີ່ແຕກຕ່າງກັນ. ສະນັ້ນ, ແຜນທີ່ດັ່ງກ່າວ ຖືວ່າເປັນເຄື່ອງມືຕິດຕາມ ພ້ອມກັນນັ້ນມັນກໍ່ສ້າງໃຫ້ເກີດມີຄວາມຄິດທີ່ຈະແຂ່ງຂັນກັນລະຫວ່າງປະຊາຊົນພາຍໃນບ້ານນັ້ນ ເພື່ອສ້າງສວ້ມຖ່າຍຂອງຕົນເອງ. ແຜນທີ່ທີ່ກ່າວມານັ້ນ ຄວນຈະຍັງມີປະສິດທິຜົນ ຈົນກວ່າຄອບຄົວທັງໝົດຈະຖືກຂີດໝາຍວ່າໄດ້ໃຊ້ສວ້ມຖ່າຍໝົດແລ້ວ ແລະ ບ້ານໄດ້ປະກາດວ່າ ເປັນບ້ານທີ່ນຳໃຊ້ວິດຖ່າຍ ຮ້ອຍສ່ວນຮ້ອຍ.

  

*ການຄິດໄລ່*

ການຄິດໄລ່ປະລິມານອາຈົມທີ່ຂັບຖ່າຍອອກມາສາມາດຊີ້ໃຫ້ເຫັນເຖິງລະດັບຂອງບັນຫາສຸຂະອະນາໄມໄດ້. ມະນຸດເຮົາແຕ່ລະຄົນ ຫຼື ແຕ່ລະຄົວເຮືອນຈະຂັບຖ່າຍຂອງເສຍອອກມາໃນແຕ່ລະມື້ໃນປະລິມານເທົ່າໃດ? ແຕ່ລະຄົວເຮືອນສາມາດໃຊ້ວິທີການຂອງຕົນ ແລະ ການວັດແທກຂອງທ້ອງຖິ່ນເພື່ອຄິດໄລ່ວ່າພວກເຂົາໄດ້ເພີ່ມບັນ ຫາຫຼາຍໜ້ອຍເທົ່າໃດ. ເອົາຈຳນວນລວມຂອງຄົວເຮືອນມາບວກໃສ່ກັນເພື່ອຄິດໄລ່ຈຳນວນລວມທັງໝົດ ຂອງຊຸມຊົນ. ຈຳນວນລວມຂອງແຕ່ລະວັນສາມາດໃຊ້ເປັນຕົວຄູນເພື່ອຊອກຫາຈຳນວນອາຈົມທີ່ຖືກຜະລິດອອກມາເປັນອາທິດ, ເປັນເດືອນ ຫລື ເປັນປີ. ປະລິມານລວມຈະກາຍເປັນໂຕນເຊິ່ງມັນຈະເຮັດໃຫ້ຊຸມຊົນມີຄວາມແປກໃຈກັບຈຳນວນດັ່ງກ່າວ.

**ການກະຕຸ້ນ ຊີແອວທີເອັດສ໌ ໃນສະຖານທີ່ທີ່ຄົນຖ່າຍຊະຊາຍ**

ໃນສະຖານທີ່ທີ່ມີຄົນຖ່າຍໃສ່ນ້ຳ (ແມ່ນ້ຳ, ບຶງ, ສາຍນ້ຳໄຫຼວົນໄປມາ ຯລຯ), ການຍ່າງສຳຫຼວດນັ້ນອາດຈະບໍ່ເຫັນຫຍັງໄດ້. ແຕ່ທ່ານຈະພົບເຫັນວ່າຊາວບ້ານໃຊ້ນ້ຳເພື່ອອາບນ້ຳ ແລະ ລ້າງໜ້າບ້ວນປາກຂອງຕົນເອງ. ເມື່ອເປັນແນວນັ້ນ, ທ່ານອາດຂໍຕັກນ້ຳມາໜຶ່ງຄຸ ແລ້ວບອກໃຫ້ເຂົາເຈົ້າລອງເອົາໄປບ້ວນປາກລອງເບິ່ງ. ເຂົາເຈົ້າຈະຕອບຕົກລົງ. ບາດນີ້ໃຫ້ຄິດໄລ່ຈຳນວນອາຈົມທີ່ສະສົມໃນແຕ່ລະວັນທີ່ຜະລິດຈາກແຕ່ລະຄອບຄົວໃນບ້ານດັ່ງກ່າວ. ນອກຈາກນັ້ນກໍ່ໃຫ້ຖາມວ່າມີຈັກຄົນໃນບ້ານທີ່ອາດຖ່າຍລົງໃນນ້ຳດັ່ງກ່າວ (ເຊັ່ນ: ຢູ່ເທິງນ້ຳ ຫຼື ອ້ອມຂ້າງບຶງ). ຫຼັງຈາກທີ່ໄດ້ຄິດໄລ່ເປັນທີ່ຮຽບຮ້ອຍແລ້ວ ໃຫ້ບອກເຂົາເຈົ້າໃຊ້ນ້ຳດັ່ງກ່າວລ້າງໜ້າ ແລະ ບ້ວນປາກຂອງຕົນເອງ. ແນ່ນອນບໍ່ມີໃຜຢາກຈະເຮັດແບບນັ້ນອີກ, ຖາມເຂົາເຈົ້າວ່າເປັນຫຍັງຈຶ່ງບໍ່ຢາກເຮັດແນວໃດ ເພາະເຂົາເຈົ້າໄດ້ໃຊ້ນ້ຳນັ້ນເພື່ອຖ່າຍ ແລະ ລ້າງອາບຕັ້ງແຕ່ໃດມາຈົນຮອດປະຈຸບັນ.

ການຄິດໄລ່ຈຳນວນອາຈົມທີ່ຊຸມຊົນຜະລິດອອກມານັ້ນຄວນຖືກຍົກຂຶ້ນມາຊັກຖາມ ແລະ ສົນທະນາກັນເຊັ່ນ: ອາຈົມທີ່ຂັບຖ່າຍອອກມານັ້ນໄປໃສໝົດ? ຜົນສະທ້ອນຈາກການທີ່ມີອາຈົມເທິງດິນຫຼາຍເກີນໄປນັ້ນມີຫຍັງແດ່? ຄຳຖາມປະເພດນີ້ຈະເຮັດໃຫ້ປະຊາຊົນເລີ່ມຄິດເພື່ອຕົນເອງກ່ຽວກັບຜົນກະທົບຂອງການຖ່າຍຊະຊາຍນັ້ນ ໂດຍທີ່ທ່ານບໍ່ຈຳເປັນຕ້ອງບອກ.

**ສິ່ງທີ່ຄວນເຮັດ:** ໃຫ້ສອບຖາມ ແລະ ພະຍາຍາມໃຫ້ປະຊາຊົນຄິດອອກດ້ວຍຕົນເອງ. ສອບຖາມຊາວບ້ານຕ່າງໆ ທັງຜູ້ຊາຍ ແລະ ແມ່ຍິງ, ເດັກນ້ອຍ, ຄົນຮັ່ງມີ ແລະ ຄົນຈົນ ເພື່ອຮັບປະກັນວ່າເຂົາເຈົ້າທັງໝົດປະຕິບັດໜ້າທີ່ຮັບຜິດຊອບ.







ໃນຕອນທ້າຍຂອງການວິເຄາະ, ທ່ານອາດຖາມເຂົາເຈົ້າວ່າ ມື້ອື່ນແມ່ນໃຜຈະໄປຖ່າຍຊະຊາຍອີກບໍ? ຫຼື ແມ່ນໃຜແດ່ຈະໄປອາບນໍ້າຢູ່ໜອງນໍ້າ ຫຼື ໃນແມ່ນໍ້າບ່ອນທີ່ທຸກຄົນໃນບ້ານໄປຖ່າຍໃສ່? ບອກເຂົາເຈົ້າໃຫ້ຍົກມືຂຶ້ນ. ຖ້າບໍ່ມີໃຜຍົກມື, ຖາມເຂົາເຈົ້າວ່າຈະເຮັດແນວໃດແທ້?

**ສິ່ງທີ່ບໍ່ຄວນເຮັດ:** ບໍ່ໃຫ້ພະຍາຍາມຊັກຊວນໃຫ້ຊຸມຊົນຢຸດເຊົາການຖ່າຍຊະຊາຍ ແລະ ເລີ່ມກໍ່ສ້າງສວ້ມຖ່າຍ. ໜ້າທີ່ຂອງທ່ານກໍ່ຄືອຳນວຍຄວາມສະດວກໃຫ້ແກ່ການວິເຄາະ ທີ່ຈະຈຸດປະກາຍຄວາມຮູ້ສຶກຂີ້ດຽດ ແລະ ຄວາມອັບອາຍ ພ້ອມກັນນັ້ນກໍ່ເຮັດໃຫ້ທຸກຄົນຫັນຈາກ ການຖ່າຍຊະຊາຍ ມາຖ່າຍໃສ່ສວ້ມຖ່າຍ ເຊິ່ງການເຮັດແນວນີ້ມັນຈະຢຸດຕິມົນລະພາວະ.

**ສິ່ງທີ່ບໍ່ຄວນເຮັດ:** ບໍ່ໃຫ້ເປັນການບັນລະຍາຍ ຫຼື ພະຍາຍາມສຶກສາອົບຮົມຊຸມຊົນກ່ຽວກັບພະຍາດທີ່ເກີດຈາກການຖ່າຍຊະຊາຍ, ແມງວັນເປັນພາຫະນຳເຊື້ອພະຍາດມາສູ່ຄົນ ຫຼື ການລ້າງມືຫຼັງຖ່າຍໃນເວລານີ້. ອົງປະກອບທີ່ສຳຄັນທີ່ສຸດທີ່ຈະຈຸດປະກາຍ ຊີແອວທີເອັດສ໌ ບໍ່ແມ່ນຄວາມຮູ້ກ່ຽວກັບອັນຕະລາຍທີ່ມີຕໍ່ສຸຂະພາບ ແຕ່ເປັນອົງປະກອບຂອງຄວາມຮູ້ສຶກຂີ້ດຽດ, ອັບອາຍ ແລະ ຄວາມຮູ້ສຶກບໍ່ສະອາດ, ຄວາມຮູ້ສຶກເປິະເປື້ອນ ແລະ ຄວາມບໍ່ບໍລິສຸດໃຈໃນຫຼາຍໆສາດສະໜາທີ່ເຊື່ອຖື.

**ສິ່ງທີ່ບໍ່ຄວນເຮັດ:** ບໍ່ຄວນເວົ້າເຖິງທຶນຊ່ວຍເຫຼືອໃດໆທັງສິ້ນໃນຕອນນີ້. ຄວນບອກຊາວບ້ານວ່າທ່ານມາທີ່ນີ້ບໍ່ແມ່ນເພື່ອສະເໜີໃຫ້ທຶນຊ່ວຍເຫຼືອ ຫຼື ແນະນຳຮູບແບບໂຖສ້ວມໃດໆທັງສິ້ນ.

## ຊ່ວງເວລາຈຸດປະກາຍ

ຈຸດສຳຄັນຂອງຂັ້ນຕອນການກະຕຸ້ນ ຊີແອວທີເອັດສ໌ ຈະສຳເລັດຜົນໄດ້ກໍ່ຕໍ່ເມື່ອຊຸມຊົນສຳນຶກໄດ້ວ່າການຖ່າຍຊະຊາຍນັ້ນໄດ້ເຮັດໃຫ້ແຕ່ລະຄົນສູບດົມກິ່ນແລະກືນກິນອາຈົມຂອງກັນແລະກັນ ແລະ ມັນຈະເປັນແບບນີ້ຕະຫຼອດໄປນອກຈາກວ່າການຖ່າຍຊະຊາຍຈະຢຸດຕິລົງຢ່າງສິ້ນເຊີງ. ມັນເປັນທີ່ກະຈາງແຈ້ງໃນຂະນະນັ້ນແລ້ວວ່າ ຜູ້ປະສານງານຄວນຈະຂອບໃຈຊຸມຊົນທີ່ໄດ້ເຮັດການວິເຄາະ ແລະ ສະຫລຸບສະພາບການໃນຊຸມຊົນຂອງເຂົາເຈົ້າ. ໃຫ້ທ່ານບອກຄົນໃນຊຸມຊົນວ່າທ່ານມາທີ່ນີ້ບໍ່ແມ່ນເພື່ອແນະນຳໃຫ້ພວກເຂົາຢຸດພຶດຕິກຳທີ່ໄດ້ປະຕິບັດມາເປັນເວລາດົນນານ ແລະ ບໍ່ໄດ້ມາເພື່ອໂຄສະນາຂາຍທີວວິດ/ໂຖສ້ວມ ຫຼື ໃຫ້ທຶນສະໜັບສະໜູນໃດໆທັງໝົດ. ບອກພວກເຂົາອີກວ່າ ພວກເຂົາມີອິດສະຫລະທີ່ຈະສືບຕໍ່ພຶດຕິກຳທີ່ກຳລັງປະຕິບັດຢູ່ຄື: ກິນອາຈົມຂອງກັນແລະກັນ, ອາບນໍ້າ ແລະ ບ້ວນປາກດ້ວຍນໍ້າທີ່ທຸກຄົນຖ່າຍໃສ່. ຂອບໃຈຊາວບ້ານໝົດທຸກຄົນ ແລະ ກໍ່ປິດການສົນທະນາ!

ໂດຍປົກກະຕິແລ້ວໃນຊ່ວງໄລຍະນີ້, ຄົນໃນຊຸມຊົນຈະເລີ່ມມີໃຈ ແລະ ມີການໂຕ້ຖຽງກັນຢ່າງຮຸນແຮງເກີດຂຶ້ນກ່ຽວກັບວ່າຈະຢຸດຕິການຖ່າຍຊະຊາຍໄດ້ແນວໃດ. ຢ່າໄປຂັດຂວາງການໂຕ້ຖຽງ ຫຼືໃຫ້ຄຳແນະນຳໃດໆ. ຄວນຮັບຟັງການສົນທະນາດັ່ງກ່າວຢ່າງງຽບໆ. ຖ້າພວກເຂົາໂຍນຄຳຖາມມາຫາທ່ານ ໃຫ້ທ່ານຕອບວ່າ ທ່ານມີຄວາມຮູ້ພຽງເລັກນ້ອຍກ່ຽວກັບຊຸມຊົນເພາະວ່າທ່ານເປັນພຽງຄົນນອກ ແລະ ພວກເຂົາຮູ້ດີວ່າຈະເລືອກປະຕິບັດແນວໃດໃນແຕ່ລະເຫດການເພາະພວກເຂົາຮູ້ດີກ່ຽວກັບສະພາບການພາຍໃນທ້ອງຖິ່ນຂອງຕົນ. ໃຫ້ທ່ານບອກພວກເຂົາເຈົ້າວ່າ ພວກເຂົາມີສິດທີ່ຈະເລືອກວ່າຈະປະຕິບັດແນວໃດຕໍ່ໄປລວມທັງການສືບຕໍ່ການຖ່າຍຊະຊາຍ.

ມາເຖິງຂັ້ນຕອນນີ້ ມີບາງຄົນອາດຈະບອກວ່າເຂົາເຈົ້າມີຄວາມສົນໃຈ ແລະ ຕ້ອງການທີ່ຈະສ້າງວິດຖ່າຍ ແຕ່ວ່າພວກເຂົາບໍ່ສາມາດເຮັດໄດ້ເພາະວ່າມັນມີລາຄາແພງ; ໃຫ້ທ່ານບອກພວກເຂົາເຈົ້າວ່າ ມັນບໍ່ເປັນເຊັ່ນນັ້ນດອກ. ໃຫ້ທ່ານຟ້າວແຕ້ມຮູບວິດຖ່າຍແບບຂຸດຂຸມທີ່ງ່າຍດາຍໃຫ້ເຂົາເຈົ້າເບິ່ງ. ຖາມວ່າ ການສ້າງສ້ວມຖ່າຍແບບຂຸດຂຸມແບບງ່າຍດາຍຄ້າຍໆກັບຮູບແຕ້ມນີ້ຈະໃຊ້ເງິນຫຼາຍປານໃດ ແລະ ມີຄວາມຍາກງ່າຍແນວໃດ? ແຈ້ງໃຫ້ພວກເຂົາຮູ້ວ່າສ້ວມຖ່າຍທີ່ແຕ້ມນີ້ບໍ່ແມ່ນທ່ານເປັນຜູ້ອອກແບບ ແຕ່ວ່າເປັນການຄົ້ນຄິດຂອງປະຊາຊົນທີ່ທຸກຍາກຢູ່ໃນປະເທດທີ່ທຸກຍາກທີ່ສຸດໃນໂລກ. ທ່ານອາດຈະເລົ່າເລື່ອງປະສົບການທີ່ໄດ້ພົບພໍ້ໃນຊຸມຊົນອື່ນໆທີ່ມີການຫັນປ່ຽນເປັນຊຸມຊົນສຸຂະອະນາໄມຢ່າງເຕັມຮ້ອຍ ແລະ ກໍ່ສາມາດສຳເລັດຜົນໄດ້ຢ່າງພາກພູມໃຈ.

**ສິ່ງທີ່ບໍ່ຄວນເຮັດ:** ອະທິບາຍເຖິງຮູບແບບຂອງສ້ວມຖ່າຍຊະນິດຕ່າງໆ. ໃຫ້ຈື່ໄວ້ວ່າຈຸດສຳຄັນທີ່ສຸດຂອງ ຊີແອວທີ ເອັດສ໌ ບໍ່ແມ່ນການພັນລະນາເຖິງສ້ວມຖ່າຍທີ່ດີ ແລະ ທີນທານທີ່ສຸດໃຫ້ຊຸມຊົນໄດ້ຮັບຮູ້ໃນເບື້ອງຕົ້ນ ແຕ່ເປັນການສົ່ງເສີມໃຫ້ມີການລິເລີ່ມໃຫ້ຊອກຫາແນວທາງປະຕິບັດທີ່ເໝາະສົມເພື່ອປ່ຽນແທນການຖ່າຍຊະຊາຍຂອງຄົນໃນຊຸມຊົນນັ້ນເອງ.

**ສິ່ງທີ່ບໍ່ຄວນເຮັດ:** ກັງວົນຖ້າຫາກບໍ່ມີຜູ້ໃດເວົ້າວ່າຈະເລີ່ມຕົ້ນທີ່ຈະແກ້ໄຂບັນຫາແນວໃດໃນເວລານີ້ ແລະ ຕໍ່ໄປກໍ່ຕາມ. ໃນກໍລະນີນີ້ໃຫ້ທ່ານຂອບໃຈພວກເຂົາເຈົ້າອີກເທື່ອໜຶ່ງ ແລະ ບອກວ່າທ່ານຈະຈົດບັນທຶກກ່ຽວກັບໝູ່ບ້ານນີ້ວ່າເປັນໝູ່ບ້ານທີ່ປະຊາຊົນມັກທີ່ຈະສືບຕໍ່ການຖ່າຍຊະຊາຍ ແລະ ກິນອາຈົມຂອງກັນ ແລະ ກັນ.





# ການວາງແຜນປະຕິບັດງານ

ຖ້າຫາກ ຊີແອວທີເອັດສ໌ ໄດ້ເລີ່ມຕົ້ນການເຄື່ອນໄຫວ ເມື່ອນັ້ນກໍ່ໃຫ້ການຊ່ວຍເຫຼືອຢ່າງເໝາະສົມ ແລະ ອຳນວຍຄວາມສະດວກຢ່າງເໝາະສົມ. ສະແດງຄວາມກະຕືລືລົ້ນໃຫ້ພວກເຂົາເຫັນວ່າ ຖ້າພວກເຂົາສາມາດປ່ຽນແປງພຶດຕິກຳດ້ານສຸຂະອະນາໄມໄດ້ ຮ້ອຍສ່ວນຮ້ອຍ ແລະ ເຂົາເຈົ້າກໍ່ສາມາດຢຸດເຊົາການຖ່າຍຊະຊາຍໄດ້ແລ້ວ ຈະມີຄົນຈຳນວນຫລາຍຈາກຂ້າງນອກ ແລະ ເພື່ອນບ້ານຂ້າງຄຽງກໍ່ຈະມາຢ້ຽມຢາມ ແລະ ຂໍເບິ່ງ ຜົນງານຂອງເຂົາເຈົ້າ. ບອກພວກເຂົາເຖິງຄວາມເປັນໄປໄດ້ທີ່ຈະກາຍເປັນບ້ານທຳອິດໃນໜ່ວຍ, ຕາແສງ, ເມືອງ ແລະ ແຂວງ ທີ່ມີຊື່ສຽງໂດ່ງດັງທີ່ໄດ້ກາຍເປັນບ້ານສຸຂະອະນາໄມທີ່ໃຊ້ວິດຖ່າຍໝົດທຸກຄົວເຮືອນ.

ຂັ້ນຕອນການວາງແຜນຄວນຈະແນໃສ່ບາງແຜນປະຕິບັດງານທີ່ເຫັນຜົນດ້ານບວກໄດ້ທັນທີທັນໃດ. ກິດຈະກຳຕ່າງໆອາດຈະປະກອບດ້ວຍ:

- ກໍ່ຕັ້ງກຸ່ມຮັກສາອະນາໄມ (ໃຫ້ມີຕົວແທນຈາກເພື່ອນບ້ານທັງໝົດໃນໝູ່ບ້ານ)
- ຂຽນລາຍການຫຼືແຜນທີ່ຂອງແຕ່ລະຄົວເຮືອນ ແລະ ສະພາບອະນາໄມໃນປະຈຸບັນຂອງພວກເຂົາເຈົ້າ.
- ສ້າງແຜນແຕ່ລະຄອບຄົວເພື່ອຢຸດຢັ້ງການຖ່າຍຊະຊາຍ. ໃນເມື່ອກ່ອນ, ບາງຄອບຄົວໄດ້ສ້າງວິດຖ່າຍເພື່ອໃຊ້ຮ່ວມກັນ.
- ຂຸດຂຸມເພື່ອໃຊ້ເປັນວິດຖ່າຍໄລຍະສັ້ນ.
- ສະໜັບສະໜູນໃຫ້ຄອບຄົວທີ່ມີຖານະດີແດ່ໃຫ້ເລີ່ມກໍ່ສ້າງວິດຖ່າຍທັນທີ.
- ຊອກຫາຜູ້ສະໜອງວັດຖຸສຳລັບການກໍ່ສ້າງວິດຖ່າຍ.

ທີມງານຄວນປຸກລະດົມໃຫ້ຄອບຄົວທີ່ມີຖານະດີກວ່າໃຫ້ຊ່ວຍເຫຼືອຄອບຄົວທີ່ມີຖານະດ້ອຍກວ່າໃນການຊອກຫາວິຖີທາງເພື່ອຢຸດຕິພຶດຕິກຳການຖ່າຍຊະຊາຍ ເພາະພວກເຂົາເຈົ້າຈະໄດ້ຮັບຜົນປະໂຫຍດເຊັ່ນດຽວກັນ. ຄອບຄົວທີ່ມີຖານະດີອາດຈະໃຫ້ການຊ່ວຍເຫຼືອຄອບຄົວທີ່ທຸກກວ່າເຊັ່ນ: ຊ່ວຍດ້ານແຮງງານ, ບໍລິຈາກໄມ້ ຫຼື ໄມ້ໄຜ່ ຫຼື ຍອມໃຫ້ໃຊ້ສ້ວມຖ່າຍໃນໄລຍະສັ້ນ. ຊອກຫາຄອບຄົວທີ່ໃຈກວ້າງດັ່ງກ່າວແລະພາເຂົາເຈົ້າຂຶ້ນມາຢືນຕໍ່ໜ້າຝູງຊົນ ແລະ ປະກາດເຖິງການບໍລິຈາກຂອງເຂົາເຈົ້າໃຫ້ແກ່ຊຸມຊົນຮັບຮູ້. ການປະກາດດັ່ງກ່າວຈະເປັນການສະ ໜັບສະໜູນໃຫ້ຄົນອື່ນໆອອກມາໃຫ້ການຊ່ວຍເຫລືອເຊັ່ນກັນ. ຜົນປະໂຫຍດຈາກການຢຸດເຊົາການຖ່າຍຊະຊາຍຈະຊ່ວຍສົ່ງເສີມການຮ່ວມມືກັນໄດ້ຫຼາຍຂຶ້ນ.

**ສິ່ງທີ່ຄວນເຮັດ**: **ໃນຊ່ວງການດຳເນີນ ພີອາເອ-**PRA ໃຫ້ສັງເກດເບິ່ງວ່າ ມີບຸກຄົນໃດທີ່ມີແວວພໍທີ່ຈະເປັນຜູ້ນຳພາໃນກຸ່ມ ໄດ້. ຫຼັງຈາກນັ້ນກໍ່ຊຸກຍູ້ໃຫ້ບຸກຄົນນັ້ນເປັນຜູ້ນຳພາການແລກປ່ຽນແນວຄວາມຄິດກັບຊຸມຊົນ ກ່ຽວກັບຜົນກະທົບຂອງການຖ່າຍຊະຊາຍ ເພື່ອຊອກຫາວິທີການແກ້ໄຂ ຫຼື ຫຼີກລ້ຽງ.

**ສິ່ງທີ່ຄວນເຮັດ**: ຄວນໃຫ້ເດັກນ້ອຍເຂົ້າມາຮ່ວມໃນການປຶກສາຫາລື ແລະ ໃຫ້ຖາມວ່າ ພວກເຂົາຈະເຮັດແນວໃດເພື່ອຢຸດເຊົາການຖ່າຍຊະຊາຍ. ໂດຍທົ່ວໄປແລ້ວ ພວກເຮົາໃຊ້ວິທີດຶງດູດຈິດໃຈເດັກນ້ອຍໂດຍໃຫ້ພວກເຂົາເຈົ້າ ຮ້ອງເພງ ຫຼື ຄຳຂວັນການຕໍ່ຕ້ານການຖ່າຍຊະຊາຍ.





# ການຈັດຕັ້ງປະຕິບັດຂອງຊຸມຊົນ ແລະ ການຕິດຕາມ

ການກະຕຸ້ນ ຊີແອວທີເອັດສ໌ ທີ່ດີຈະເປັນການພັກດັນໃຫ້ມີການປ່ຽນແປງພຶດຕິກຳຢ່າງໄວວາ ເພື່ອຫລຸດຜ່ອນການຖ່າຍຊະຊາຍ ແລະ ອາດເຮັດໃຫ້ບ້ານນັ້ນ ກາຍເປັນບ້ານທີ່ນຳໃຊ້ວິດຖ່າຍຮ້ອຍສ່ວນຮ້ອຍໄດ້ ບໍ່ພໍເທົ່າໃດອາທິດ ຫຼື ເທົ່າໃດເດືອນ ຂຶ້ນກັບຂະໜາດຂອງໝູ່ບ້ານນັ້ນວ່າໃຫຍ່ນ້ອຍພຽງໃດ. ມັນມັກທີ່ຈະເກີດຂຶ້ນທັນທີ ຫຼື ບໍ່ເກີດຂຶ້ນເລີຍ. ເຖິງຢ່າງໃດກໍ່ຕາມ, ການຕິດຕາມແມ່ນເປັນສິ່ງສຳຄັນເພື່ອຈະຮັບປະກັນເຖິງຄວາມຍືນຍົງຂອງ ຊີແອວທີເອັດສ໌ ກໍ່ຄືປະຊາຊົນຍອມຮັບການນຳໃຊ້ວິດຖ່າຍໃນໄລຍະຍາວ.

ສິ່ງສຳຄັນອີກຢ່າງໜຶ່ງກໍແມ່ນ ການຊອກຫາຜູ້ນຳພາຂະບວນການ ເພື່ອເຂົາເຈົ້າຮັບຜິດຊອບການປະຕິບັດແຜນງານທີ່ໄດ້ກຳນົດໄວ້ ແລະ ເພື່ອໃຫ້ໝັ້ນໃຈວ່າຊຸມຊົນໄດ້ມີການປ່ຽນແປງພຶດຕິກຳຢ່າງຖາວອນ. ຈົ່ງຈຳໄວ້ສະເໝີວ່າຈຸດປະສົງຂອງທ່ານທີ່ມານີ້ແມ່ນເພື່ອກະຕຸ້ນໃຫ້ຊຸມຊົນເປັນເຈົ້າການ ໃນການຈັດຕັ້ງປະຕິບັດເພື່ອປ່ຽນແປງພຶດຕິກຳການຖ່າຍຊະຊາຍ ໂດຍທີ່ທ່ານບໍ່ຈຳເປັນຕ້ອງໄດ້ລົງມືເຮັດດ້ວຍຕົວເອງ.

ເມື່ອໃດທີ່ສຳເລັດໄດ້ ການເປັນບ້ານທີ່ນຳໃຊ້ວິດຖ່າຍຮ້ອຍສ່ວນຮ້ອຍແລ້ວ, ຄວນຊຸກຍູ້ໃຫ້ປະຊາຊົນຕິດຕັ້ງປ້າຍທີ່ມີຂໍ້ຄວາມຂຽນເຖິງຄວາມສຳເລັດດັ່ງກ່າວ. ສິ່ງດັ່ງກ່າວ ຈະຊ່ວຍເພີ່ມທະວີຄວາມພາກພູມໃຈໃຫ້ແກ່ພວກເຂົາ ແລະ ຍັງໃຊ້ເປັນສິ່ງດຶງດູດຄວາມສົນໃຈຂອງຜູ້ທີ່ມາຢ້ຽມຢາມໝູ່ບ້ານທີ່ຢາກນຳເອົາແນວຄິດນີ້ກັບໄປຍັງໝູ່ບ້ານຂອງພວກເຂົາ. ຊຸມຊົນອາດຈຳເປັນຕ້ອງສ້າງລະບຽບການລົງໂທດຕໍ່ຜູ້ທີ່ຍັງສືບຕໍ່ພຶດຕິກຳການຖ່າຍຊະຊາຍ ເພື່ອຮັບປະກັນວ່າຄົນໃນຊຸມຊົນຈະບໍ່ກັບຄືນໄປປະຕິບັດເຊັ່ນນັ້ນອີກ.

ເມື່ອເວລາຜ່ານໄປ, ຊຸມຊົນຈະມີການປ່ຽນແປງພຶດຕິກຳໄປເທື່ອລະກ້າວ. ເມື່ອຄອບຄົວເລີ່ມນຳໃຊ້ສ້ວມຖ່າຍ, ພວກເຂົາຈະເກີດຄວາມຊິນເຄີຍ ວ່າມີຄວາມປອດໄພ, ສະດວກສະບາຍ ແລະ ບໍ່ຢາກກັບຄືນໄປຖ່າຍຊະຊາຍອີກ. ການປ່ຽນແປງພຶດຕິກຳນີ້ດີກວ່າການສ້າງສ້ວມຖ່າຍທີ່ມີຄຸນນະພາບ ເພາະມັນເປັນກຸນແຈສຳຄັນຕໍ່ກັບຄວາມຍືນຍົງຂອງວິທີການແບບ ຊີແອວທີເອັດສ໌. ແຕ່ເຖິງຢ່າງໃດກໍ່ດີ, ສ້ວມຖ່າຍທີ່ປະຊາຊົນສ້າງດ້ວຍຕົ້ນທຶນຕ່ຳ ອາດຈະນຳໃຊ້ໄດ້ບໍ່ດົນ ເນື່ອງຈາກມັນສາມາດນຳໃຊ້ໄດ້ພາຍໃນໜຶ່ງປີ ຫຼື ດົນກວ່ານັ້ນ ສ້ວມອາດຈະເຕັມ ຫລື ຫລັງຄາອາດຈະພັງເພລົງມາ.





ໂດຍປົກກະຕິແລ້ວ, ແຕ່ລະຄົວເຮືອນແມ່ນ ຕ້ອງການມີວິດຖ່າຍທີ່ດີ ແລະ ໝັ້ນຄົງຍາວນານ ຂຶ້ນໄປເລື້ອຍໆ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນບາງກໍລະນີຍັງຈຳເປັນຕ້ອງຕິດຕາມ ເພື່ອປຸກລະດົມໃຫ້ຄົນໃນຊຸມຊົນປະຕິບັດຕາມຄຳໝັ້ນສັນຍາທີ່ພວກເຂົາໄດ້ໃຫ້ໄວ້.

***ສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ***

| **ສິ່ງທີ່ບໍ່ຄວນເຮັດ** | ***ສິ່ງທີ່ຄວນເຮັດ*** |
| --- | --- |
| ໃຫ້ຄວາມຮູ້ | ອຳນວຍຄວາມສະດວກ |
| ແນະນຳສິ່ງທີ່ດີ ແລະ ບໍ່ດີ ໃຫ້ແກ່ປະຊາຊົນ | ປ່ອຍໃຫ້ປະຊາຊົນຮູ້ເອົາເອງ |
| ສະເໜີການຊ່ວຍເຫລືອດ້ານອຸປະກອນຕ່າງໆໃນການກໍ່ສ້າງ | ກະຕຸ້ນໃຫ້ປະຊາຊົນປະຕິບັດ |
| ໂຄສະນາຮູບແບບວິດຖ່າຍຕ່າງໆ | ປ່ອຍໃຫ້ປະຊາຊົນຄິດຄົ້ນຮູບແບບວິດຖ່າຍເອົາເອງ |
| ເປັນຜູ້ນຳຄວບຄຸມທັງໝົດ | ມອບໝາຍໜ້າທີ່ການຄວບຄຸມໃຫ້ຜູ້ນຳຂັ້ນບ້ານ |
| ອອກຄຳສັ່ງ ຫຼື ຄາດຫວັງໃຫ້ເກີດຜົນ | ກະຕຸ້ນການປຸກລະດົມຕົນເອງ ດ້ວຍການອຳນວຍຄວາມສະດວກທີ່ດີ |

## ການຜັນຂະຫຍາຍ ຊີແອວທີເອັດສ໌

ຮູບແບບຂອງການອຳນວຍຄວາມສະດວກ ແມ່ນ ທັດສະນະຄະຕິ ແລະ ຮູບແບບວິທີການດຳເນີນງານຂອງ ຜູ້ປະສານງານ ຫຼື ພະນັກງານສົ່ງເສີມຖືວ່າເປັນກຸນແຈສຳຄັນຂອງການກະຕຸກຊຸກຍູ້ຂອງ ຊີແອວທີເອັດສ໌. ຜູ້ປະສານງານ ຫຼື ພະນັກງານສົ່ງເສີມ ຈະເຮັດທຸກວິທີທາງເພື່ອຫຼີກລ້ຽງ 'ການໃຫ້ຄວາມຮູ້' ແລະ 'ການແນະນຳ', ຖ້າຫາກປະຕິບັດໄດ້ເຊັ່ນນັ້ນ ກໍ່ຈະເຮັດໃຫ້ຊຸມຊົນເຂົ້າໃຈເຖິງບັນຫາສຸຂະອະນາໄມ ແລະ ເປັນເຈົ້າການເພື່ອແກ້ໄຂບັນຫາດັ່ງກ່າວດ້ວຍຕົນເອງ. ໂດຍປົກກະຕິແລ້ວ ວິທີການດັ່ງກ່າວນີ້ ແມ່ນມີຄວາມຫຍຸ້ງຍາກພໍສົມຄວນສຳລັບ 'ບຸກຄົນພາຍນອກທີ່ມີຄວາມຮູ້' ເນື່ອງຈາກພວກເຂົາຜູ້ທີ່ເຫັນວ່າມັນ ເປັນສິ່ງ ທ້າທາຍທີ່ຈະນຳໃຊ້ວິທີດັ່ງກ່າວມາແກ້ໄຂບັນຫາ ຫຼື ປ່ຽນແທນວິທີການບັນລະຍາຍກ່ຽວກັບສຸຂະອະນາໄມ ແລະ ການໃຫ້ຄຳແນະນຳໃຫ້ປະຊາຊົນວ່າຕ້ອງເຮັດຫຍັງແດ່. ຜູ້ປະສານງານ ຫຼື ພະນັກງານສົ່ງເສີມ ທີ່ດີຄວນຈະເປັນຄົນໃນທ້ອງຖິ່ນຜູ້ທີ່ໄດ້ຮຽນຮູ້ກ່ຽວກັບ ຊີແອວທີເອັດສ໌ ຈາກຜູ້ທີ່ມີປະສົບການ ແລະ ບໍ່ມີນິໄສມັກ 'ສອນ'ຄົນອື່ນ. ຜູ້ປະສານງານຄົນທ້ອງຖິ່ນນີ້ອາດຈະໄດ້ຮັບການຝຶກອົບຮົມໄລຍະສັ້ນໂດຍການນຳໃຊ້ເຕັດລັບໃນປຶ້ມຄູ່ມືສະບັບນີ້ເພື່ອເປັນແນວທາງ ແລະ ແນວຄວາມຄິດເປັນພື້ນຖານ. ນອກຈາກນີ້ ບຸກຄົນດັ່ງກ່າວອາດຕ້ອງການຄ່າໃຊ້ຈ່າຍຕ່າງໆນອກເໜືອຈາກຄ່າເດີນທາງເພື່ອທີ່ຈະໃຊ້ໃນການເດີນທາງໄປຫາຊຸມຊົນອື່ນໆ ພ້ອມທັງຄ່າຕອບແທນທີ່ເໝາະສົມສຳລັບວຽກຂອງພວກເຂົາເຈົ້າ.

ເພາະສະນັ້ນ ຊີແອວທີເອັດສ໌ ສາມາດຂະຫຍາຍອອກໄປໃນວົງກ້ວາງ ແລະ ໃນລາຄາໃຊ້ຈ່າຍທີ່ບໍ່ສູງ. ບ່ອນໃດທີ່ມີອົງການຜູ້ໃຫ້ທຶນ, ລັດຖະບານ, ກົມກອງ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGO) ແລະ ອົງການສາກົນຕ່າງໆ ຈັດຕັ້ງປະຕິບັດງານ ແມ່ນທີ່ມັກຈະປະສົມປະສານນຳໃຊ້ ຊີແອວທີເອັດສ໌ ເຂົ້າໃນແຜນງານອະນາໄມຂອງພວກເຂົາ ຫຼື ໃຊ້ເພື່ອເປັນຈຸດເລີ່ມຕົ້ນພື້ນຖານໃຫ້ແກ່ວຽກງານການປັບປຸງຊີວິດການ ເປັນຢູ່ ຫຼື ແຜນງານສາທາລະນະສຸກ ນັ້ນ, ອົງການເຫລົ່ານີ້ຈະຈົດຈຳໄວ້ສະເໝີວ່າຜູ້ປະສານງານທ້ອງຖິ່ນຈະເປັນບຸກຄົນທີ່ເໝາະສົມທີ່ສຸດສຳລັບວຽກງານເຫລົ່ານີ້.

ໃນເວລາຂະຫຍາຍ ຊີແອວທີເອັດສ໌ ອອກໄປ, ຄວນຄຳນຶງເຖິງສະພາບເງື່ອນໄຂປະຈຸບັນຂອງທ້ອງຖິ່ນ ວ່າຈະສາມາດ ນຳໃຊ້ ຊີແອວທີເອັດສ໌ ໃຫ້ປະສົບຜົນສຳເລັດໄດ້ແນວໃດ. ມັນຈະຕ້ອງມີຄວາມເປັນໄປໄດ້ທີ່ປະຊາຊົນຈະຫັນປ່ຽນມາສ້າງສ້ວມຖ່າຍທີ່ບໍ່ແພງເຊັ່ນ: ອາດຕ້ອງມີເນື້ອທີ່ດິນທີ່ສາມາດຂຸດເລິກສົມຄວນໄດ້ດ້ວຍແຮງງານຄົນໃນທ້ອງຖິ່ນຫຼືດ້ວຍເຄື່ອງຈັກ. ຕາມທຳມະດາແລ້ວ, ພື້ນທີ່ດິນໃນບາງເຂດຕົວເມືອງມັກຈະຫາໄດ້ຍາກ ແລະ ກຳມະສິດທີ່ດິນກໍ່ບໍ່ໝັ້ນຄົງ. ດ້ວຍເຫດນີ້ ຈຶ່ງເຫັນໄດ້ວ່າມັນເປັນສິ່ງທ້າທາຍທີ່ສຸດ ແລະ ຊີແອວທີເອັດສ໌ ກໍ່ຍັງບໍ່ສາມາດປະສົບຜົນສຳເລັດໃນເຂດດັ່ງກ່າວ ໄດ້ເທື່ອ. ຊີແອວທີເອັດສ໌ ສາມາດປະສົບຜົນສຳເລັດໄດ້ໃນເຂດຊົນນະບົດທີ່ມີປະຊາກອນແໜ້ນໜາສົມຄວນ ເພາະການຖ່າຍຊະຊາຍ ແມ່ນຢູ່ໃກ້ກັບເຂດທີ່ພັກອາໃສ ແລະ ສັງເກດເຫັນໄດ້ງ່າຍ.





ທ້າຍສຸດ, ຊີແອວທີເອັດສ໌ ຈະຊີ້ໃຫ້ເຫັນເຖິງການຫັນປ່ຽນແນວຄວາມຄິດຕ່າງໆກ່ຽວກັບໂຄງການສຸຂະອານະໄມ ຈາກໂຄງການໃຫ້ທຶນສົ່ງເສີມການສ້າງວິດຖ່າຍທີ່ດີມີຄຸນນະພາບໃຫ້ກາຍມາເປັນການປຸກລະດົມສ້າງວິດຖ່າຍແບບງ່າຍດາຍ ແລະ ໃນລາຄາຕົ້ນທຶນທີ່ຕ່ຳ ທີ່ສາມາດໃຫ້ຜົນປະໂຫຍດແກ່ໝົດທຸກຄົນໄດ້. ຄວາມແຕກຕ່າງຂອງວິທີການຫັນປ່ຽນແນວຄວາມຄິດ ໄດ້ຖືກລະບຸລົງໃນຕາຕະລາງຂ້າງລຸ່ມນີ້ແລ້ວ.

ເປົ້າໝາຍຂອງການຫັນປ່ຽນເຫລົ່ານີ້ອາດຈະມີຄວາມໝາຍສຳຄັນຕໍ່ກັບສະຖາບັນຕ່າງໆທີ່ຢາກຈະປັບປຸງ, ນຳໃຊ້ ແລະ ຂະຫຍາຍ ຊີແອວທີເອັດສ໌ ອອກໄປ. ມັນຊີ້ໃຫ້ເຫັນເຖິງການປ່ຽນແປງແນວຄວາມຄິດຂອງສະຖາບັນ ແລະ ຂອງສ່ວນບຸກຄົນ ແລະ ພຶດຕິກຳຕ່າງໆຊຶ່ງເປັນຮູບແບບການໃຫ້ (ເຊັ່ນ: ໃຫ້ທຶນຊ່ວຍເຫຼືອ), ແບບມືອາຊີບ (ເຊັ່ນ: ສົ່ງເສີມມາດຕະຖານທີ່ສູງ) ແລະ ແບບການເມືອງ (ເຊັ່ນ: ການໃຊ້ຈ່າຍງົບປະມານທີ່ສູງ). ໃນທາງກົງກັນຂ້າມ, ຊີແອວທີເອັດສ໌ ແມ່ນດຳເນີນໄປບົນຫຼັກການທີ່ບໍ່ມີການຊ່ວຍເຫລືອດ້ານອຸປະກອນໃດໆ ແຕ່ໃຫ້ນຳໃຊ້ເງື່ອນໄຂຄວາມສະດວກທາງດ້ານພູມປັນຍາທ້ອງຖິ່ນຈາກຜູ້ນຳພາຂອງຊຸມຊົນ ໂດຍໃຊ້ການຝຶກອົບຮົມລາຄາຖືກ ເຊິ່ງບໍ່ຕ້ອງການງົບປະມານທີ່ສູງ. ມັນເປັນຂັ້ນຕອນທີ່ມີຊຸມຊົນເປັນຜູ້ນຳພາທີ່ແທ້ຈິງ ແລະ ການປະຕິບັດກໍ່ແມ່ນຊຸມຊົນ ເປັນເຈົ້າການ ແລະ ມັນຈະບໍ່ດຳເນີນໄປເພື່ອເພີ່ມເງິນທຶນ. ອົງການຈັດຕັ້ງສາກົນເປັນຕົ້ນແມ່ນອົງການທີ່ບໍ່ສັງກັດລັດຖະບານ (NGO) ມີໜ້າທີ່ສົ່ງເສີມການເຜີຍແຜ່ຄວາມຮູ້ລະຫວ່າງປະເທດ ແລະ ຊຸກຍູ້ໂຄງການແນວຄວາມຄິດລິເລີ່ມໃນຂັ້ນທ້ອງຖິ່ນ ແລະ ຂັ້ນສູນກາງ. ລັດຖະບານ ແລະ ອົງການ NGO ມີໜ້າທີ່ຮັບປະກັນໃຫ້ເກີດມີເງື່ອນໄຂຕ່າງໆ ແລະ ເຮັດໃຫ້ມີການຂະຫຍາຍກວ້າງອອກ. ການດຳເນີນງານຈະຕ້ອງເຮັດດ້ວຍຄວາມໂອບເອື້ອອາລີ ເພື່ອເຮັດໃຫ້ ຊີແອວທີເອັດສ໌ ໄດ້ຮັບຜົນການກະຕຸ້ນເປັນຢ່າງດີ ແລະ ໄດ້ຮັບການຂະຫຍາຍຈາກຊຸມຊົນສູ່ຊຸມຊົນ.

| | **ໃນອາດີດ**<br>**ເປົ້າໝາຍຂັບເຄື່ອນ ສຸຂະອະນາໄມ ບາງສ່ວນ** | ປະຈຸບັນ ແລະ ອານາຄົດ<br>ວຽກງານສຸຂາພິບານໂດຍຊຸມຊົນເປັນເຈົ້າການ |
|---|---|---|
| ເລີ່ມຕົ້ນດ້ວຍ | ສິ່ງຂອງ | ປະຊາຊົນ |
| ກິດຈະກຳຫຼັກ | ການສ້າງວິດຖ່າຍ | ຂັ້ນຕອນຈຸດປະກາຍ ແລະ ອຳນວຍຄວາມສະດວກ |
| ວິດຖ່າຍອອກແບບໂດຍ | ວິສະວະກອນ | ຊຸມຊົນເປັນຜູ້ປະດິດຄິ້ນ |
| ຈຳນວນປະເພດຂອງວິດຖ່າຍ | ໜຶ່ງ ຫຼື ມີຈຳນວນໜ້ອຍ | ຫຼາຍໆຮູບແບບ |
| ອຸປະກອນສຳຄັນ | ຊີມັງ, ທໍ່, ດິນຈີ່, ອື່ນໆ ທີ່ຊື້ຈາກບ່ອນອື່ນ | ໄມ້ໄຜ່, ໄມ້, ຫີນ, ຫຍ້າຊະນິດໄວ້ມຸງຫຼັງຄາ, ປູາດ ຕົກ ແລະ ອື່ນໆ ຊຶ່ງທຸກຢ່າງທີ່ກ່າວມານີ້ສາມາດຫາໄດ້ໃນທ້ອງຖິ່ນ |
| ລາຄາ | ສູງ | ອາດຈະຕ່ຳກວ່າ 1 ໂດລາ |
| ຕົວຊີ້ວັດ | ຈຳນວນວິດຖ່າຍທີ່ສ້າງສຳເລັດ | ຢຸດເຊົາການຖ່າຍຊະຊາຍ |
| ຄວາມຍືນຍົງ | ສ່ວນໃດໜຶ່ງ ແລະ ປະສົມປົນເປກັນ | ສູງ |
| ແມ່ນໃຜເປັນຜູ້ຮັບຜົນປະໂຫຍດ | ຜູ້ທີ່ມີຖານະດີ | ທຸກຊົນຊັ້ນລວມທັງຄົນທຸກຍາກທີ່ສຸດ |
| ກຸນແຈຂອງການປະດິດຄິດຄົ້ນ | ການຊ່ວຍເຫລືອທາງດ້ານການເງິນ | ເກີດຄວາມຂີ້ດຽດ ແລະ ການນັບຖືຕົນເອງ |
| ການຄອບຄຸມ/ອັດຕາການນຳໃຊ້ | ສ່ວນໃດໜຶ່ງ | ເຕັມສ່ວນ |
| ຜົນປະໂຫຍດ | ຕ່ຳກວ່າ:<br>ຍັງສືບຕໍ່ການຖ່າຍຊະຊາຍ | ສູງກວ່າ: ຢຸດຕິການຖ່າຍຊະຊາຍ |